EDD Employment Development Department
State of California

ສໍາລັບ

# ເງິນປະໂຫຍດ ຂອງທ່ານ:

## ໂຄງການ ຂອງລັດຄາລິຟໍເນຍສໍາລັບ ຄົນວ່າງງານ

ການປະກັນການວ່າງງານ

ການປະກັນຄົນພິການ

ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ

ການບໍລິການດ້ານແຮງງານ

# ສໍາລັບຜົນປະໂຫຍດຂອງທ່ານ: ໂຄງການຂອງລັດຄາລິຟໍເນຍ
# ສໍາລັບຄົນວ່າງງານ

ສື່ສິ່ງພິມນີ້ໃຫ້ຂໍ້ມູນກ່ຽວກັບໂຄງການຕ່າງໆທີ່ສະໜອງໃຫ້ໂດຍກົມພັດທະນາການຈ້າງງານ (Employment Development Department : EDD) ສໍາລັບປະຊາຊົນລັດຄາລິຟໍເນຍທີ່ວ່າງງານ. ເອກະສານສະບັບນີ້ແມ່ນສໍາລັບຂໍ້ມູນທົ່ວໄປເທົ່ານັ້ນ ແລະ ມັນບໍ່ແມ່ນເອກະສານທາງກົດໝາຍ.

ຂໍ້ມູນເພີ່ມເຕີມແມ່ນມີໃຫ້ໂດຍການໄປທີ່ EDD online (edd.ca.gov).


ການປະກັນໄພສໍາລັບຄົນວ່າງງານ (UI) ........ 2

ຜົນປະໂຫຍດ UI ໃຫ້ເງິນທົດແທນຄ່າຈ້າງບາງສ່ວນໃຫ້ແກ່ຜູ້ເຮັດວຽກທີ່ ວ່າງງານເຊິ່ງບໍ່ໄດ້ເກີດຈາກຄວາມຜິດຂອງພວກເຂົາເອງ.

ການປະກັນຄົນພິການຂອງລັດ (SDI) ........ 13

ການປະກັນຄົນພິການ (DI) ແມ່ນສ່ວນໜຶ່ງຂອງ SDI ແລະ ໃຫ້ຜົນປະໂຫຍດທົດແທນຄ່າຈ້າງບາງສ່ວນຕໍ່ຜູ້ເຮັດວຽກ ທີ່ບໍ່ສາມາດເຮັດວຽກ ເນື່ອງຈາກຄວາມເຈັບປ່ວຍ ຫຼື ການບາດເຈັບ, ການຖືພາ ຫຼື ການເກີດລູກທີ່ບໍ່ກ່ຽວກັບວຽກງານ.

ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ (PFL) ........ 14

PFL ແມ່ນສ່ວນໜຶ່ງຂອງ SDI ແລະ ຜົນປະໂຫຍດທົດແທນຄ່າຈ້າງບາງສ່ວນຕໍ່ຜູ້ເຮັດວຽກ ທີ່ຕ້ອງການເວລາພັກເພື່ອດູແລສະມາຊິກຄອບຄົວທີ່ເຈັບປ່ວຍຢ່າງຮ້າຍແຮງ, ເພື່ອເບິ່ງແຍງເດັກນ້ອຍເກີດໃໝ່ ຫຼື ເພື່ອໃຫ້ຄວາມຊ່ວຍເຫຼືອແກ່ສະມາຊິກຄອບຄົວໃນລະຫວ່າງກິດຈະກໍາຄັດເລືອກທາງການທະຫານ.

ການບໍລິການດ້ານແຮງງານ ........ 14

ຂະແໜງການບໍລິການດ້ານແຮງງານຂອງ EDD ໃຫ້ການບໍລິການທາງການຈ້າງງານທີ່ຫຼາກຫຼາຍ ສໍາລັບຜູ້ຊອກຫາວຽກ ແລະ ຜູ້ຈ້າງງານ.

ວິທີການຮັບຄວາມຊ່ວຍເຫຼືອ ........ 19

# ການປະກັນການວ່າງງານ (UI)
UI ໄດ້ຮັບເງິນຊຳລະໂດຍຜູ້ຈ້າງງານຂອງທ່ານ ແລະ ໃຫ້ເງິນທົດແທນຄ່າຈ້າງບາງສ່ວນ ເມື່ອທ່ານວ່າງງານ ແລະ ບັນລຸເກນເງື່ອນໄຂເພື່ອຮັບສິດທັງໝົດ.

## ຜູ້ໃດຄວນຍື່ນອ້າງສິດຂໍ UI
ທ່ານອາດຍື່ນອ້າງສິດຂໍຜົນປະໂຫຍດ UI ຖ້າທ່ານບໍ່ໄດ້ເຮັດວຽກ ຫຼື ຊົ່ວໂມງເຮັດວຽກຂອງທ່ານຖືກຫຼຸດລົງ.

ເພື່ອທີ່ຈະມີສິດຮັບຜົນປະໂຫຍດ UI, ທ່ານຕ້ອງໄດ້ຮັບຄ່າຈ້າງຢ່າງພຽງພໍໃນລະຫວ່າງຊ່ວງເວລາຖານ ເພື່ອຈັດຕັ້ງການອ້າງສິດ ແລະ:

- ວ່າງງານຈາກວຽກເຕັມເວລາ ຫຼື ວຽກບາງເວລາ.
- ວ່າງງານໂດຍບໍ່ໄດ້ເກີດມາຈາກຄວາມຜິດຂອງທ່ານເອງ.
- ສາມາດເຮັດວຽກທາງຮ່າງກາຍ.
- ພ້ອມເຮັດວຽກ.
- ກຽມພ້ອມ ແລະ ເຕັມໃຈທີ່ຈະຍອມຮັບວຽກງານໃນທັນທີ.
- ຊອກຫາວຽກງານຢ່າງກະຕືລືລົ້ນ.

## ເມື່ອໃດຕ້ອງຍື່ນອ້າງສິດ
ທ່ານອາດສະໝັກຂໍຜົນປະໂຫຍດໃນທັນທີທີ່ທ່ານວ່າງງານ ຫຼື ຊົ່ວໂມງເຮັດວຽກຂອງທ່ານຖືກຫຼຸດລົງ. ການອ້າງສິດຂອງທ່ານຈະເລີ່ມໃນວັນອາທິດຂອງອາທິດທີ່ທ່ານຍື່ນອ້າງສິດຂອງທ່ານ.

ການອ້າງສິດທັງໝົດມີຊ່ວງເວລາລໍຖ້າໜຶ່ງອາທິດທີ່ບໍ່ຈຳເປັນຕ້ອງຊຳລະ. ຊ່ວງເວລາລໍຖ້າຈະບໍ່ເລີ່ມຕົ້ນຂຶ້ນຈົນກວ່າທ່ານຈະຍື່ນອ້າງສິດ, ຢືນຢັນຜົນປະໂຫຍດ ແລະ ບັນລຸເກນເງື່ອນໄຂເພື່ອຮັບສິດທັງໝົດ.

## ສິ່ງທີ່ທ່ານຕ້ອງມີເພື່ອຍື່ນອ້າງສິດ
ເພື່ອຍື່ນອ້າງສິດ, ທ່ານຈຳເປັນຕ້ອງໃຫ້:

- ຊື່, (ລວມຊື່ທັງໝົດທີ່ທ່ານໃຊ້ໃນຂະນະທີ່ກຳລັງເຮັດວຽກ) ແລະ ໝາຍເລກປະກັນສັງຄົມ.
- ທີ່ຢູ່ໄປສະນີ ແລະ ທີ່ຢູ່ອາໄສ (ຖ້າແຕກຕ່າງ) ແລະ ໝາຍເລກໂທລະສັບ.
- ຊື່ເຕັມຂອງຜູ້ຈ້າງງານຄົນກ່ອນໜ້າ, ທີ່ຢູ່ (ສະຖານທີ່ໄປສະນີ ແລະ ສະຖານທີ່ຕັ້ງ) ແລະ ໝາຍເລກໂທລະສັບ.
- ມື້ສຸດທ້າຍທີ່ເຮັດວຽກ ແລະ ເຫດຜົນທີ່ທ່ານບໍ່ເຮັດວຽກອີກຕໍ່ໄປ (ການຖືກພັກວຽກ, ການລາອອກ, ການຖືກໄລ່ອອກ ຫຼື ການອອກຈາກວຽກ ເພາະຂໍ້ຂັດແຍ່ງທາງການຄ້າ).
- ປະຫວັດການເຮັດວຽກໃນລະຫວ່າງ 18 ເດືອນ ກ່ອນທີ່ຈະຍື່ນອ້າງສິດຂອງທ່ານ, ເຊິ່ງລວມເຖິງການຈ້າງງານນອກລັດ. ລວມເຖິງຊື່ຂອງຜູ້ຈ້າງງານທັງໝົດ, ວັນທີຈ້າງງານ ແລະ ຄ່າຈ້າງທີ່ໄດ້ຮັບ.
- ໝາຍເລກໃບຂັບຂີ່ທີ່ລັດອອກໃຫ້ ຫຼື ໝາຍເລກບັດປະຈຳຕົວ.
- ສະຖານະພົນລະເມືອງ ແລະ ຖ້າທ່ານມີສິດຕາມກົດໝາຍທີ່ຈະເຮັດວຽກໃນສະຫະລັດອາເມຣິກາ ຫຼື ບໍ່. ຖ້າທ່ານລະບຸວ່າທ່ານໄດ້ຂຶ້ນທະບຽນກັບ United States Citizenship and Immigration Services (USCIS, ຮູ້ກັນກ່ອນໜ້າຄື INS) ແລະ ໄດ້ຮັບອະນຸຍາດໃຫ້ເຮັດວຽກໃນສະຫະລັດອາເມຣິກາ, ທ່ານຈະຖືກຖາມເພື່ອຂໍຫົວຂໍ້ເອກະສານອະນຸຍາດການຈ້າງງານຂອງທ່ານ ແລະ ຂໍ້ມູນຈາກເອກະສານ USCIS ເຊັ່ນ: ໝາຍເລກທະບຽນຂອງຕ່າງຊາດ, ໝາຍເລກບັດ ແລະ/ຫຼື ວັນທີໝົດອາຍຸ.

**ໝາຍເຫດ:** ຊື່ ແລະ ທີ່ຢູ່ຂອງຜູ້ຈ້າງງານກ່ອນໜ້າຂອງທ່ານແມ່ນມີຄວາມສຳຄັນຫຼາຍ, ບໍ່ວ່າທ່ານຈະເຮັດວຽກໃຫ້ກັບຜູ້ຈ້າງງານດົນສ່ຳໃດ. ຖ້າທ່ານເຮັດວຽກເປັນບາງເວລາ, ໃຫ້ລະບຸຈຳນວນຊົ່ວໂມງທີ່ທ່ານເຮັດວຽກໃນແຕ່ລະອາທິດ.

**ຖ້າທ່ານເຮັດວຽກໃນໜ່ວຍງານການທະຫານ** ໃນ 18 ເດືອນທີ່ຜ່ານມາ, ທ່ານຈຳເປັນຕ້ອງໃຫ້ຂໍ້ມູນຈາກ DD214 Member Copy 4 ຂອງທ່ານ.

**ຖ້າທ່ານເຮັດວຽກສຳລັບລັດຖະບານກາງ** ໃນລະຫວ່າງ 18 ເດືອນທີ່ຜ່ານມາ, ທ່ານຈຳເປັນຕ້ອງໃຫ້ຂໍ້ມູນຈາກ *Notice to Federal Employees About Unemployment Insurance*, Standard Form 8 ຂອງທ່ານ.

## ການແຈ້ງເຕືອນ

ການຖະແຫຼງການຜິດ ຫຼື ການກັກຂໍ້ມູນເພື່ອຮັບຜົນປະໂຫຍດສາມາດເປັນອາຊະຍາກຳ. ການລົງໂທດອາດປະກອບມີການປັບໃໝ, ການສູນເສຍຜົນປະໂຫຍດ ແລະ/ຫຼື ການຮ້ອງຟ້ອງທາງອາຍາ. ເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບການສໍ້ໂກງ ແລະ ການລົງໂທດໃນ ໜ້າທີ 12.

## ການແຈ້ງການຕໍ່ຜູ້ຈ້າງງານ

ຜູ້ຈ້າງງານກ່ອນໜ້າຂອງທ່ານຈະໄດ້ຮັບແຈ້ງການ ເມື່ອທ່ານຍື່ນອ້າງສິດຂໍ UI. ເຖິງແມ່ນການຮັບສິດຂອງທ່ານຖືກກຳນົດໂດຍ EDD, ຜູ້ຈ້າງງານສະໜອງທຶນໃຫ້ແກ່ໂຄງການ UI ແລະ ຖືກກຳນົດໂດຍກົດໝາຍໃຫ້ສະໜອງຂໍ້ມູນໃດໜຶ່ງທີ່ອາດສົ່ງຜົນກະທົບຕໍ່ສິດຂອງທ່ານເພື່ອຮັບຜົນປະໂຫຍດຂອງທ່ານ.

## ປະເພດການອ້າງສິດ

ການອ້າງສິດທີ່ທ່ານຍື່ນຂໍແມ່ນຂຶ້ນກັບປະເພດຂອງຜູ້ຈ້າງງານທີ່ທ່ານເຮັດວຽກ ແລະ ລັດທີ່ທ່ານເຮັດວຽກ.

ທ່ານຈະຍື່ນ:

- ການອ້າງສິດຂໍແບບປົກກະຕິໃນລັດຄາລິຟໍເນຍ ຖ້າທ່ານພຽງແຕ່ເຮັດວຽກໃນລັດຄາລິຟໍເນຍ, ເຖິງແມ່ນວ່າທ່ານອາໄສຢູ່ນອກລັດຄາລິຟໍເນຍໃນຕອນນີ້.
- ການອ້າງສິດຕໍ່ລັດຖະບານກາງ ຖ້າການຈ້າງງານເປັນວຽກງານພົນລະເຮືອນສຳລັບລັດຖະບານກາງ.
- ການອ້າງສິດທາງການທະຫານ ຖ້າທ່ານເຮັດໜ້າທີ່ເປັນສະມາຊິກຂອງກອງທັບແຫ່ງສະຫະລັດອາເມຣິກາ.
- ການອ້າງສິດຂໍຄ່າຈ້າງແບບປະສົມປະສານ ຖ້າທ່ານໄດ້ຮັບຄ່າຈ້າງໃນລັດຄາລິຟໍເນຍ ແລະ ລັດອື່ນອີກໜຶ່ງລັດເປັນຢ່າງໜ້ອຍໃນລະຫວ່າງ 18 ເດືອນທີ່ຜ່ານມາ.
- ການອ້າງສິດລະຫວ່າງລັດ ຖ້າທ່ານອາໄສຢູ່ໃນລັດຄາລິຟໍເນຍໃນຕອນນີ້ ແລະ ພຽງແຕ່ເຮັດວຽກໃນລັດອື່ນໃນລະຫວ່າງ 18 ເດືອນທີ່ຜ່ານມາ. ຍື່ນການອ້າງສິດຂອງທ່ານກັບລັດອື່ນ, ເຂດປົກຄອງໂຄລອມເບຍ, ເຄືອລັດປູໂຕຣິໂກ ຫຼື ປະເທດການາດາໂດຍກົງ. ຖ້າທ່ານເຮັດວຽກໃນເກາະເວີຈິນຂອງສະຫະລັດອາເມຣິກາ, ໃຫ້ຕິດຕໍ່ EDD ທີ່ໝາຍເລກ 1-800-300-5616.

## ວິທີການຍື່ນ

ທ່ານອາດຍື່ນອ້າງສິດຂໍ UI ໂດຍໃຊ້ໜຶ່ງໃນວິທີການດັ່ງຕໍ່ໄປນີ້:

- **ອອນລາຍ**
  UI Online[SM] ຄືວິທີການທີ່ໄວທີ່ສຸດ ແລະ ສະດວກສະບາຍທີ່ສຸດໃນການຍື່ນອ້າງສິດຂໍ UI ຂອງທ່ານ. ໄປທີ່ UI Online[SM] (edd.ca.gov/UI_Online) ເພື່ອເລີ່ມຕົ້ນ.

- **ໂທລະສັບ**
  ລົມກັບຕົວແທນ EDD ໃນວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 12 ໂມງສວາຍ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ. ໄປທີ່ ໜ້າ 19 ສໍາລັບ ລາຍຊື່ໝາຍເລກໂທລະສັບຂອງ UI.

- **ແຟັກ ຫຼື ໄປສະນີ**
  ເມື່ອກໍາລັງຍື່ນອ້າງສິດກັບ UI Online, ລູກຄ້າບາງຄົນຈະໄດ້ຮັບຄໍາສັ່ງໃຫ້ສົ່ງແບບຟອມສະໝັກ UI ຂອງພວກເຂົາໃຫ້ EDD ຜ່ານແຟັກ ຫຼື ໄປສະນີ. ຖ້າສິ່ງນີ້ເກີດຂຶ້ນ, ເອກະສານ *Unemployment Insurance Application* (DE 1101I) ຈະສະແດງໃຫ້ທ່ານເພື່ອຕື່ມຂໍ້ມູນ ແລະ ຍື່ນ.

  ສໍາລັບການປະມວນຜົນທີ່ໄວຂຶ້ນ ແລະ ປອດໄພຂຶ້ນ, ໃຫ້ສົ່ງແບບຟອມທີ່ມີຂໍ້ມູນຜ່ານແຟັກໄປທີ່ໝາຍເລກທີ່ຖືກລະບຸໄວ້ໃນແບບຟອມ. ຖ້າກໍາລັງສົ່ງແບບຟອມສະໝັກ UI ຂອງທ່ານຜ່ານໄປສະນີ, ໃຫ້ໃຊ້ທີ່ຢູ່ໃນແບບຟອມ ແລະ ອະນຸຍາດໃຫ້ມີເວລາເພີ່ມຂຶ້ນສໍາລັບການປະມວນຜົນ.

## ວັນທີເລີ່ມຕົ້ນຂອງການອ້າງສິດ

ການອ້າງສິດຂອງທ່ານເລີ່ມຕົ້ນໃນວັນອາທິດຂອງອາທິດທີ່ທ່ານຍື່ນອ້າງສິດຂອງທ່ານ.

## ວັນທີສິ້ນສຸດຂອງການອ້າງສິດ

ການອ້າງສິດຂອງທ່ານສິ້ນສຸດໃນວັນເສົາ, 52 ອາທິດຫຼັງຈາກທີ່ການອ້າງສິດຂອງທ່ານເລີ່ມຕົ້ນຂຶ້ນ. ຖ້າທ່ານໝົດຜົນປະໂຫຍດຂອງທ່ານກ່ອນວັນທີນີ້, ທ່ານບໍ່ສາມາດຍື່ນການອ້າງສິດອື່ນໃນລັດຄາລິຟໍເນຍຈົນກວ່າປີຜົນປະໂຫຍດການອ້າງສິດຈະສິ້ນສຸດລົງ.

ຖ້າທ່ານເຮັດວຽກໃນລັດອື່ນໃນລະຫວ່າງ 18 ເດືອນທີ່ຜ່ານມາ, ທ່ານອາດມີສິດຍື່ນອ້າງສິດໃໝ່ໃນລັດນັ້ນ.

## ລາຍໄດ້ຂັ້ນຕໍ່າເພື່ອຈັດຕັ້ງການອ້າງສິດທີ່ຖືກຕ້ອງ

ທ່ານຕ້ອງມີລາຍໄດ້ຢ່າງໜ້ອຍ $1,300 ໃນໜຶ່ງໄຕມາດຂອງຊ່ວງເວລາຖານຂອງທ່ານ ຫຼື ລາຍໄດ້ຢ່າງໜ້ອຍ $900 ໃນໄຕມາດສູງສຸດ ແລະ 1.25 ເທົ່າຂອງລາຍໄດ້ໃນໄຕມາດສູງສຸດຂອງທ່ານໃນຊ່ວງເວລາຖານທັງໝົດຂອງທ່ານ.

ຕົວຢ່າງ: ຖ້າທ່ານມີລາຍໄດ້ $900 ໃນໄຕມາດສູງສຸດຂອງທ່າ, ທ່ານຍັງຈໍາເປັນຕ້ອງມີລາຍໄດ້ທັງໝົດ $1,125 ໃນຊ່ວງເວລາຖານ ($900 x 1.25 = $1,125).

## ວິທີການຄໍານວນຜົນປະໂຫຍດ UI

ໄຕມາດທີ່ທ່ານໄດ້ຮັບເງິນຄ່າຈ້າງສູງສຸດໃນລະຫວ່າງຊ່ວງເວລາຖານຈະກໍານົດຈໍານວນຜົນປະໂຫຍດປະຈໍາອາທິດ (WBA) ຂອງທ່ານ. WBA ມີຄວາມແຕກຕ່າງຈາກ $40 ຫາ $450 ຕໍ່ອາທິດ.

ຈໍານວນຜົນປະໂຫຍດສູງສຸດແມ່ນ 26 ເທົ່າຂອງຈໍານວນຜົນປະໂຫຍດປະຈໍາອາທິດ ຫຼື ເຄິ່ງໜຶ່ງຂອງຄ່າຈ້າງໃນຊ່ວງເວລາຖານທັງໝົດ, ເຊິ່ງຈະເລືອກຕາມຈໍານວນທີ່ໜ້ອຍກວ່າ.

ໄປທີ່ **ຕາຕະລາງຜົນປະໂຫຍດການປະກັນການວ່າງງານ** ໃນ ໜ້າທີ 16 ເພື່ອຄາດຄະເນ WBA ຂອງທ່ານ.

## ຊ່ວງເວລາຖານ

ມີຊ່ວງເວລາຖານສອງປະເພດທີ່ຖືກໃຊ້ເພື່ອຈັດຕັ້ງການອ້າງສິດ: ຊ່ວງເວລາຖານທີ່ເປັນມາດຕະຖານ ແລະ ຊ່ວງເວລາຖານທາງເລືອກ.

## ຊ່ວງເວລາຖານທີ່ເປັນມາດຕະຖານ (SBP)

SBP ແມ່ນສີ່ໄຕມາດທຳອິດຂອງຫ້າໄຕມາດກ່ອນໜ້າທີ່ສຳເລັດຕາມປະຕິທິນ ກ່ອນວັນທີເລີ່ມຕົ້ນຂອງການອ້າງສິດ.

ອ້າງອີງໃສ່ແຜນຜັງຂ້າງລຸ່ມນີ້. ພື້ນທີ່ໝາຍສີແມ່ນໝາຍເຖິງຊ່ວງເວລາຖານທີ່ເປັນມາດຕະຖານ. ພື້ນທີ່ບໍ່ໝາຍສີແມ່ນໝາຍເຖິງໄຕມາດທີ່ໄດ້ຍື່ນການອ້າງສິດ.

| | | | | | | | | |
|---|---|---|---|---|---|---|---|---|
| ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | | ມັງກອນ<br>ກຸມພາ<br>ມີນາ | | | |
| | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | | ເມສາ<br>ພຶດສະພາ<br>ມິຖຸນາ | | |
| | | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | | ກໍລະກົດ<br>ສິງຫາ<br>ກັນຍາ | |
| | | | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | | ຕຸລາ<br>ພະຈິກ<br>ທັນວາ |

ຖ້າການອ້າງສິດຂອງທ່ານເລີ່ມຕົ້ນໃນ:

## ຊ່ວງເວລາຖານທາງເລືອກ (ABP)

ຖ້າທ່ານບໍ່ມີຄ່າຈ້າງທີ່ພຽງພໍໃນຊ່ວງເວລາຖານທີ່ເປັນມາດຕະຖານ, ທ່ານອາດມີຄຸນສົມບັດຍື່ນອ້າງສິດໂດຍໃຊ້ ABP.

ABP ແມ່ນສີ່ໄຕມາດກ່ອນໜ້າທີ່ສຳເລັດຕາມປະຕິທິນ ກ່ອນວັນທີເລີ່ມຕົ້ນຂອງການອ້າງສິດ.

EDD ຈະຍື່ນອ້າງສິດຂໍ ABP ແທນທ່ານໂດຍອັດຕະໂນມັດ ຖ້າທ່ານບໍ່ມີສິດຂໍ SBP.

ທ່ານອາດຖືກຖາມເພື່ອຂໍຂໍ້ມູນເພີ່ມເຕີມກ່ຽວກັບຄ່າຈ້າງ ເພື່ອວ່າ EDD ຈະສາມາດຄຳນວນຈຳນວນຜົນປະໂຫຍດຂອງທ່ານຢ່າງຖືກຕ້ອງ. ຖ້າທ່ານໄດ້ຮັບ *Affidavit of Wages* (DE 23A), ໃຫ້ສະໜອງເອກະສານທີ່ຮ້ອງຂໍ ແລະ ສົ່ງຄືນໃຫ້ກັບ EDD.

**ໝາຍເຫດ:** ABP ສາມາດ **ພຽງແຕ່** ຖືກນຳໃຊ້ ເມື່ອບໍ່ມີລາຍໄດ້ຄ່າຈ້າງທີ່ພຽງພໍໃນຊ່ວງເວລາຖານທີ່ເປັນມາດຕະຖານເພື່ອຈັດຕັ້ງການອ້າງສິດ.

ອ້າງອີງໃສ່ແຜນຜັງຂ້າງລຸ່ມນີ້. ພື້ນທີ່ໝາຍສີແມ່ນໝາຍເຖິງ ABP. ພື້ນທີ່ບໍ່ໝາຍສີແມ່ນໝາຍເຖິງໄຕມາດທີ່ໄດ້ຍື່ນການອ້າງສິດ.

| | | | | | | | |
|---|---|---|---|---|---|---|---|
| ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | | | |
| | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | | |
| | | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | |
| | | | ຕຸລາ<br>ພະຈິກ<br>ທັນວາ | ມັງກອນ<br>ກຸມພາ<br>ມີນາ | ເມສາ<br>ພຶດສະພາ<br>ມິຖຸນາ | ກໍລະກົດ<br>ສິງຫາ<br>ກັນຍາ | ຕຸລາ<br>ພະຈິກ<br>ທັນວາ |

ຖ້າການອ້າງສິດຂອງທ່ານເລີ່ມຕົ້ນໃນ:

## ຊ່ວງເວລາລໍຖ້າ
ການອ້າງສິດຂໍການປະກັນການວ່າງງານມີຊ່ວງເວລາລໍຖ້າທີ່ຈໍາເປັນ, ເປັນເວລາໜຶ່ງອາທິດ ແລະ ບໍ່ມີການຊໍາລະ. ໂດຍທົ່ວໄປແລ້ວ, ຊ່ວງເວລາລໍຖ້ານີ້ມີຜົນໃນອາທິດທໍາອິດທີ່ສາມາດອ້າງສິດໄດ້ ແລະ ກ່ອນທີ່ຈະຊໍາລະຜົນປະໂຫຍດ. ຢ່າລໍຖ້າທີ່ຈະຍື່ນອ້າງສິດຂອງທ່ານ ເພາະຊ່ວງເວລາລໍຖ້າບໍ່ສາມາດໃຊ້ໄດ້ຈົນກວ່າຈະມີການຍື່ນອ້າງສິດ.

## ວິທີການຢືນຢັນຜົນປະໂຫຍດ
ເພື່ອໃຊ້ຊ່ວງເວລາລໍຖ້າຂອງທ່ານ ແລະ ຮັບເອົາການຊໍາລະຜົນປະໂຫຍດ, ທ່ານຕ້ອງບັນລຸເກນເງື່ອນໄຂເພື່ອຮັບສິດທັງໝົດ ແລະ ຢືນຢັນຜົນປະໂຫຍດທຸກໆສອງອາທິດ.

ມີສາມວິທີທີ່ຈະຢືນຢັນຜົນປະໂຫຍດ:

- **UI Online℠:** (edd.ca.gov/UI_Online) ນີ້ແມ່ນວິທີການທີ່ໄວທີ່ສຸດທີ່ຈະຢືນຢັນຜົນປະໂຫຍດ ແລະ ລາຍງານວຽກງານ ແລະ ຄ່າຈ້າງ. ເພື່ອນໍາໃຊ້ UI Online, ທ່ານຕ້ອງສ້າງຂໍ້ມູນເຂົ້າສູ່ລະບົບທີ່ປອດໄພຜ່ານ Benefit Programs Online **ແລະ** ຕື່ມຂໍ້ມູນໃສ່ແບບຟອມລົງທະບຽນຄັ້ງດຽວສໍາລັບ UI Online.

  ສໍາລັບຄວາມສະດວກສະບາຍເພີ່ມເຕີມ, UI Online Mobile℠ ແມ່ນມີໃຫ້ສໍາລັບອຸປະກອນມືຖື.

- **EDD Tele-Cert℠:** 1-866-333-4606
  ຢືນຢັນທາງໂທລະສັບໂດຍໂທຫາ 1-866-333-4606. ເລືອກທາງເລືອກທີ 2 ແລະປະຕິບັດຕາມຄໍາສັ່ງທັງໝົດ. ເພື່ອເຂົ້າເຖິງ EDD Tele-Cert, ທ່ານຕ້ອງສ້າງ PIN.

- **ໄປສະນີ:** ຕື່ມຂໍ້ມູນ, ເຊັນ ແລະ ສົ່ງແບບຟອມ *Continued Claim* (DE 4581) ໃຫ້ EDD ທາງໄປສະນີ.

  **ໝາຍເຫດ:** ສໍາລັບການປະມວນຜົນທີ່ໄວຂຶ້ນ, ໃຫ້ຢືນຢັນຜ່ານ UI Online ຫຼື EDD Tele-Cert.

## ການຊໍາລະ
ການຊໍາລະແມ່ນຈະຖືກກໍານົດອອກ ຫຼັງຈາກທີ່ທ່ານຢືນຢັນຜົນປະໂຫຍດ ແລະ ສືບຕໍ່ບັນລຸເກນເງື່ອນໄຂເພື່ອຮັບສິດທັງໝົດສໍາລັບທຸກອາທິດທີ່ທ່ານຍື່ນອ້າງສິດຂໍຜົນປະໂຫຍດ.

ທ່ານມີທາງເລືອກກ່ຽວກັບວິທີທີ່ທ່ານຮັບເອົາການຊໍາລະຜົນປະໂຫຍດຂອງທ່ານ. EDD ກໍານົດອອກຊໍາລະຜົນປະໂຫຍດໂດຍ EDD Debit Card℠ ຫຼື ໂດຍແຊັກ. EDD Debit Card ແມ່ນວິທີການທີ່ໄວທີ່ສຸດ ແລະ ປອດໄພທີ່ສຸດທີ່ຈະຮັບເອົາຜົນປະໂຫຍດຂອງທ່ານ. ເຖິງຢ່າງໃດກໍ່ຕາມ, ທ່ານບໍ່ຈໍາເປັນຕ້ອງຍອມຮັບ. ຫຼັງຈາກທີ່ມີການຍື່ນອ້າງສິດຂອງທ່ານ, ໃຫ້ຕິດຕໍ່ EDD ຖ້າທ່ານປາຖະໜາທີ່ຈະຮັບຜົນປະໂຫຍດຂອງທ່ານທາງແຊັກທີ່ເປັນເຈ້ຍ.

EDD Debit Card ແມ່ນໃຊ້ໄດ້ເປັນເວລາສາມປີ ແລະ ໃຊ້ໄດ້ສໍາລັບຜົນປະໂຫຍດທັງໝົດຂອງການປະກັນຄົນພິການ (DI), ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ (PFL) ແລະ ການປະກັນການວ່າງງານ (UI).

ຖ້າທ່ານມີ EDD Debit Card ຈາກການອ້າງສິດຂໍ DI, PFL ຫຼື UI ໃນກ່ອນໜ້າ ເຊິ່ງຍັງສາມາດໃຊ້ໄດ້, ທ່ານຈະບໍ່ໄດ້ຮັບບັດໃໝ່ທາງໄປສະນີຈົນບັດດັ່ງກ່າວຈະໝົດອາຍຸ. ຖ້າທ່ານຕ້ອງການບັດທົດແທນ, ໃຫ້ຕິດຕໍ່ໜ່ວຍບໍລິການລູກຄ້າບັດເດບິດ EDD ຂອງ Bank of America ໂດຍໂທຫາ 1-866-692-9374 ຫຼື 1-866-656-5913 (TTY).

ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ໄປທີ່ Bank of America EDD Debit Card (bankofamerica.com/EDDCard).

## ເງື່ອນໄຂດ້ານອາກອນ
ຜົນປະໂຫຍດ UI ແມ່ນຈະຖືກຫັກອາກອນລາຍໄດ້ຈາກລັດຖະບານກາງ, ແຕ່ຖືກຍົກເວັ້ນຈາກອາກອນລາຍໄດ້ຂອງລັດຄາລິຟໍເນຍ. ທຸກຄັ້ງທີ່ທ່ານຍື່ນຍັນຜົນປະໂຫຍດ, ທ່ານສາມາດເລືອກທີ່ຈະຫັກ 10 ເປີເຊັນສຳລັບອາກອນລາຍໄດ້ຂອງລັດຖະບານກາງຈາກການຊຳລະຜົນປະໂຫຍດປະຈຳອາທິດຂອງທ່ານ. ຖ້າບໍ່ດັ່ງນັ້ນ, ທ່ານອາດຈຳເປັນຕ້ອງຊຳລະອາກອນໃນທ້າຍປີ, ເມື່ອທ່ານຍື່ນແບບສະແດງລາຍການອາກອນຂອງທ່ານ.

ທຸກໆເດືອນມັງກອນ, EDD ຈະສົ່ງ Form 1099G ທາງໄປສະນີໃຫ້ກັບຄົນທີ່ໄດ້ຮັບຜົນປະໂຫຍດ UI ໃນລະຫວ່າງປີປະຕິທິນກ່ອນໜ້າ. ໃຫ້ໃຊ້ແບບຟອມດັ່ງກ່າວເພື່ອລາຍງານຂໍ້ມູນທາງດ້ານອາກອນທີ່ສຳຄັນໃນແບບສະແດງລາຍການອາກອນຂອງທ່ານສຳລັບລັດຖະບານກາງ. ທ່ານສາມາດເຂົ້າເຖິງຂໍ້ມູນໃນ Form 1099G ເປັນເວລາຈົນເຖິງຫ້າປີຜ່ານມາ ແລະ/ຫຼື ຮ້ອງຂໍສຳເນົາຊ້ອນຜ່ານ UI Online ຫຼື ໂດຍໂທຫາ 1-866-401-2849.

## ພັນທະການສະໜັບສະໜູນເດັກນ້ອຍ
ຜົນປະໂຫຍດ UI ຂອງທ່ານອາດຖືກຫຼຸດລົງ ຖ້າທ່ານຈຳເປັນຕ້ອງຊຳລະເພື່ອສະໜັບສະໜູນເດັກນ້ອຍໃຫ້ແກ່ສານ, ສຳນັກງານຂອງ District Attorney ຫຼື ໜ່ວຍງານອື່ນໆທີ່ບັງຄັບໃຊ້ກົດໝາຍເພື່ອສະໜັບສະໜູນເດັກນ້ອຍ.

## ລາຍງານລາຍໄດ້
ທ່ານຈຳເປັນຕ້ອງລາຍງານ **ທັງໝົດ** ຂອງວຽກງານ, ຄ່າຈ້າງ ແລະ ລາຍໄດ້ອື່ນໆໃຫ້ EDD ໃນລະຫວ່າງອາທິດທີ່ມີລາຍໄດ້, ບໍ່ແມ່ນໃນເວລາທີ່ທ່ານໄດ້ຮັບເງິນຄ່າຈ້າງຂອງທ່ານ. ຄວາມລົ້ມເຫຼວທີ່ຈະລາຍງານລາຍໄດ້ຂອງທ່ານຢ່າງຖືກຕ້ອງສາມາດສົ່ງຜົນໃຫ້ເກີດການຊຳລະເງິນເກີນ ແລະ ການລົງໂທດ.

ປະເພດຂອງລາຍໄດ້ທີ່ຕ້ອງລາຍງານ:

- ງານທີ່ຄິດຄ່າຈ້າງຕໍ່ສ່ວນ
- ເງິນວ່າງວຽກ
- ຄ່າທຳນຽມສານ
- ຄ່າທຳນຽມ
- ຄ່າທຳນຽມພະຍານ
- ຄ່າຈ້າງເພື່ອນຳໃຊ້ຕໍ່
- ຄ່າຈ້າງໃນມື້ພັກ
- ຄ່າມັດຈຳ
- ເງິນຄ້າງຊຳລະ
- ເງິນລາງວັນ
- ເງິນສຳລັບມື້ພັກ
- ເງິນທົດແທນໃນແຈ້ງການ
- ເງິນໂບນັດ
- ເງິນພິເສດ
- ລາຍໄດ້ຈາກການເຮັດວຽກອິດສະຫຼະ
- ຜົນປະໂຫຍດການນັດຢຸດວຽກ/ເງິນສຳລັບການປະທ້ວງ
- ເງິນສຳລັບການສຳຮອງ
- ເງິນສຳລັບຍາດພີ່ນ້ອງເສຍຊີວິດ
- ເງິນຈ່າຍຄືນ
- ການລາພັກວຽກດ້ວຍເຫດຜົນຄວາມເຈັບປ່ວຍແຕ່ຍັງໄດ້ຮັບຄ່າຈ້າງ
- ເງິນບຳນານຊົດເຊີຍ, ເງິນກະສຽນ, ເງິນປະຈຳປີຂອງຜູ້ເຮັດວຽກ

**ໝາຍເຫດ:** ທ່ານຕ້ອງລາຍງານຄ່າເດີນທາງ, ຄ່າພັກເຊົາ, ຄ່າອາຫານ ຫຼື ການຊຳລະອື່ນໆທີ່ທ່ານໄດ້ຮັບແທນເງິນ ເມື່ອທ່ານເຮັດວຽກ. ຖ້າທ່ານບໍ່ແນ່ໃຈວ່າຈະລາຍງານຄ່າຈ້າງແນວໃດ, ໃຫ້ຕິດຕໍ່ EDD.

## ເງິນບຳນານ ຫຼື ເງິນກະສຽນ
ຜົນປະໂຫຍດ UI ອາດຖືກຫຼຸດລົງ ຖ້າທ່ານກຳລັງໄດ້ຮັບເງິນບຳນານ, ເງິນກະສຽນ, ເງິນປະຈຳປີ ຫຼື ການຊຳລະອື່ນໆທີ່ຄ້າຍຄືກັນ ໂດຍອີງໃສ່ວຽກງານກ່ອນໜ້າຂອງທ່ານ.

ຜົນປະໂຫຍດສຳລັບການປະກັນສັງຄົມແມ່ນບໍ່ສາມາດຖືກຫັກໄດ້ຈາກຜົນປະໂຫຍດ UI ແລະ ບໍ່ຈຳເປັນຕ້ອງລາຍງານໃຫ້ EDD.

## ວຽກງານບາງເວລາ

ຖ້າທ່ານເຮັດວຽກໜ້ອຍກວ່າວຽກງານເຕັມເວລາ, ທ່ານຈຳເປັນຕ້ອງລາຍງານວຽກງານນັ້ນໃຫ້ EDD. ເຖິງຢ່າງໃດກໍ່ຕາມ, ທ່ານອາດຍັງມີສິດໄດ້ຮັບຜົນປະໂຫຍດ UI ບາງສ່ວນ. $25 ທຳອິດ ຫຼື 25 ເປີເຊັນຂອງຍອດລາຍໄດ້ຂອງທ່ານສຳລັບອາທິດດັ່ງກ່າວ (ເຊິ່ງຈະເລືອກຕາມຈຳນວນທີ່ຫຼາຍກວ່າ) ແມ່ນຈະບໍ່ຖືກນັບໃສ່ຈຳນວນຜົນປະໂຫຍດຂອງທ່ານ. ຈຳນວນຄົງເຫຼືອແມ່ນຈະຖືກຫັກອອກຈາກຈຳນວນຜົນປະໂຫຍດປະຈຳອາທິດຂອງທ່ານ.

ຕົວຢ່າງ 1:

ຈຳນວນຜົນປະໂຫຍດປະຈຳອາທິດຂອງທ່ານແມ່ນ $50. ທ່ານຫາໄດ້ $30. ທ່ານຕ້ອງລາຍງານ $30; ເຖິງຢ່າງໃດກໍ່ຕາມ, $25 ທຳອິດແມ່ນຈະບໍ່ຖືກນັບ, ເຮັດໃຫ້ຫັກ $5 ອອກຈາກຈຳນວນຜົນປະໂຫຍດປະຈຳອາທິດຂອງທ່ານ. ທ່ານຈະໄດ້ຮັບ $45 ($50 ລົບ $5) ໃນຜົນປະໂຫຍດ UI.

ຕົວຢ່າງ 2:

ຈຳນວນຜົນປະໂຫຍດປະຈຳອາທິດຂອງທ່ານແມ່ນ $400. ທ່ານຫາໄດ້ $200. ທ່ານຕ້ອງລາຍງານ $200; ເຖິງຢ່າງໃດກໍ່ຕາມ, 25 ເປີເຊັນ ($50) ແມ່ນຈະບໍ່ຖືກນັບ, ເຮັດໃຫ້ຫັກ $150 ອອກຈາກຈຳນວນຜົນປະໂຫຍດປະຈຳອາທິດຂອງທ່ານ. ທ່ານຈະໄດ້ຮັບ $250 ($400 ລົບ $150) ໃນຜົນປະໂຫຍດ UI.

## ວິທີການພິຈາລະນາເກນເງື່ອນໄຂຂອງທ່ານ

ເພື່ອທີ່ຈະມີສິດ, ທ່ານຕ້ອງ:

- ອອກຈາກໂດຍ ເຊິ່ງບໍ່ໄດ້ເກີດຈາກຄວາມຜິດຂອງພວກເຂົາເອງ.
- ສາມາດເຮັດວຽກທາງຮ່າງກາຍ.
- ພ້ອມທີ່ຈະຮັບວຽກ.
- ຊອກຫາວຽກງານຢ່າງກະຕືລືລົ້ນ.

ຖ້າທ່ານຖືກພັກວຽກ, ທ່ານຈະຖືວ່າອອກຈາກວຽກ ເຊິ່ງບໍ່ໄດ້ເກີດຈາກຄວາມຜິດຂອງພວກເຂົາເອງ.

ຖ້າທ່ານລາອອກຈາກວຽກກ່ອນໜ້າຂອງທ່ານ, ຖືກໄລ່ອອກ ຫຼື ວ່າງງານເນື່ອງຈາກການນັດຢຸດວຽກ ຫຼື ການປິດໂຮງງານ, EDD ຈະນັດໝາຍການສຳພາດທາງໂທລະສັບກັບທ່ານເພື່ອເກັບກຳຂໍ້ມູນກ່ຽວກັບເຫດຜົນທີ່ທ່ານບໍ່ໄດ້ເຮັດວຽກອີກຕໍ່ໄປ. ຜົນປະໂຫຍດ UI ຂອງທ່ານແມ່ນຈະບໍ່ມີການຊຳລະຈົນກວ່າການສຳພາດທາງໂທລະສັບຂອງທ່ານຈະສຳເລັດ, ທ່ານຢືນຢັນຜົນປະໂຫຍດ ແລະ EDD ກຳນົດເກນເງື່ອນໄຂຂອງທ່ານ.

ທ່ານມີສິດທີ່ຈະຮ້ອງຂໍເວລາຫຼາຍຂຶ້ນໃນການເກັບກຳຂໍ້ມູນ, ຕິດຕໍ່ພະຍານ ຫຼື ຮັບເອົາຄຳແນະນຳຈາກຕົວແທນ. ຖ້າເກີດມີບັນຫາກ່ຽວກັບເກນເງື່ອນໄຂເຊິ່ງກ່ຽວພັນກັບຜູ້ຈ້າງງານ, EDD ອາດຕິດຕໍ່ຜູ້ຈ້າງງານ.

ຖ້າທ່ານໄດ້ຮັບຄຳຮ້ອງເປັນລາຍລັກອັກສອນສຳລັບຂໍ້ມູນເພີ່ມເຕີມ ແລະ ທ່ານຕອບກັບທາງໄປສະນີ, ຜູ້ສຳພາດ EDD ຈະໃຊ້ຂໍ້ມູນທີ່ຖືກສະໜອງໃຫ້ເພື່ອກຳນົດເກນເງື່ອນໄຂຂອງທ່ານ.

ຖ້າທ່ານຖືກປະຕິເສດຜົນປະໂຫຍດດ້ວຍເຫດຜົນໃດໜຶ່ງສຳລັບການອ້າງສິດຂອງທ່ານ,ເຊິ່ງລວມເຖິງຄ່າຈ້າງທີ່ບໍ່ພຽງພໍທີ່ຈະຈັດຕັ້ງການອ້າງສິດ, *Notice of Determination* (DE 1080CZ) ທີ່ເປັນລາຍລັກອັກສອນແມ່ນຈະຖືກສົ່ງໃຫ້ທ່ານທາງໄປສະນີ ເພື່ອອະທິບາຍເຫດຜົນພ້ອມກັບສິດໃນການອຸທອນຂອງທ່ານ.

**ສຳຄັນ:** ຜົນປະໂຫຍດຂອງທ່ານອາດຖືກເຮັດໃຫ້ຊັກຊ້າ ຫຼື ຖືກປະຕິເສດ ຖ້າທ່ານບໍ່ພ້ອມໃຫ້ສຳພາດ ຫຼື ບໍ່ໄດ້ຍື່ນຂໍ້ມູນທີ່ຈຳເປັນ. EDD ຈະດຳເນີນການຕັດສິນໃຈກ່ຽວກັບເກນເງື່ອນໄຂ ໂດຍອີງໃສ່ຂໍ້ມູນທີ່ມີໃຫ້.

## ຂະບວນການອຸທອນ

ຖ້າທ່ານຖືກປະຕິເສດຜົນປະໂຫຍດ UI, ທ່ານມີສິດທາງກົດໝາຍທີ່ຈະອຸທອນຄຳຕັດສິນໂດຍຕື່ມຂໍ້ມູນ ແລະ ສົ່ງ *Appeal Form* (DE 1000M) ທາງໄປສະນີ. ເພື່ອທີ່ຈະຖືກພິຈາລະນາໄດ້ທັນເວລາ, ມັນຕ້ອງຖືກສົ່ງພາຍໃນ 30 ມື້ປະຕິທິນຫຼັງຈາກວັນທີສົ່ງໄປສະນີຂອງ *Notice of Determination* (DE 1080CZ). ຖ້າທ່ານພາດກຳນົດເວລາ 30 ມື້, ທ່ານອາດຍັງອຸທອນໄດ້, ແຕ່ທ່ານຕ້ອງສະແດງສາຍເຫດທີ່ຊອບທຳສຳລັບການຊັກຊ້າ.

ການອຸທອນຂອງທ່ານຈະຖືກພິຈາລະນາໂດຍຜູ້ພິພາກສາອິດສະຫຼະໃນກົດໝາຍການບໍລິຫານ. ການພິຈາລະນາຄະດີເປັນສິ່ງທີ່ບໍ່ເປັນທາງການ, ແຕ່ຄຳພະຍານທັງໝົດແມ່ນຈະໄດ້ສາບານຕົນ ແລະ ສາມາດຊັກຖາມໄດ້. ສຳນັກງານອຸທອນຈະແຈ້ງທ່ານກ່ຽວກັບວັນທີ ແລະ ສະຖານທີ່ດຳເນີນການພິຈາລະນາຄະດີ.

ກ່ອນການພິຈາລະນາຄະດີ, ທ່ານມີສິດທີ່ຈະກວດສອບການບັນທຶກທັງໝົດທີ່ສົ່ງຜົນກະທົບຕໍ່ການອຸທອນຂອງທ່ານ. ການບັນທຶກເຫຼົ່ານີ້ແມ່ນຖືກສະໜອງໃຫ້ໂດຍ California Unemployment Insurance Appeals Board (CUIAB). ທ່ານສາມາດຮ້ອງຂໍການບັນທຶກຈາກ EDD ເພື່ອກະກຽມສຳລັບການພິຈາລະນາຄະດີຂອງທ່ານ.

ໃນການພິຈາລະນາຄະດີ, ທ່ານອາດມີຕົວແທນເປັນຕົນເອງ, ເຈົ້າໜ້າທີ່ສະມາຄົມ, ທະນາຍຄວາມ ຫຼື ຜູ້ໃດກໍ່ຕາມທີ່ທ່ານເລືອກ. ທ່ານອາດນຳເອກະສານໃດໜຶ່ງທີ່ກ່ຽວຂ້ອງທີ່ທ່ານອາດມີເພື່ອສະໜັບສະໜູນຄະດີຂອງທ່ານ.

ຫຼັງຈາກການພິຈາລະນາຄະດີ, ທ່ານຈະໄດ້ຮັບຄຳຕັດສິນຂອງຜູ້ພິພາກສາໃນກົດໝາຍການບໍລິຫານທາງໄປສະນີ. ຖ້າທ່ານບໍ່ພໍໃຈ, ທ່ານອາດຍື່ນການອຸທອນລະດັບສອງໄປທີ່ CUIAB.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການນຳໃຊ້ປະມວນກົດໝາຍ UI, ເຊິ່ງລວມເຖິງກໍລະນີສຶກສາໃນປັດຈຸບັນ, ໃຫ້ເບິ່ງ [Benefit Determination Guide](edd.ca.gov/uibdg) ໃນອອນລາຍ (edd.ca.gov/uibdg).

**ສຳຄັນ:** ທ່ານຈຳເປັນຕ້ອງສືບຕໍ່ຢືນຢັນຜົນປະໂຫຍດ ເມື່ອການອ້າງສິດຂອງທ່ານກຳລັງຢູ່ໃນການອຸທອນ. ຖ້າມີຄຳຕັດສິນຕ່າງຈາກຄຳຕັດສິນໃນເບື້ອງຕົ້ນ, EDD ສາມາດກຳນົດອອກການຊຳລະທັງໝົດຄືນໃຫ້ກັບທ່ານໂດຍໄວ. **ການລະເລີຍທີ່ຈະປະຕິບັດຕາມສາມາດສົ່ງຜົນໃຫ້ຜົນປະໂຫຍດຂອງທ່ານຖືກປະຕິເສດ ຫຼື ຖືກເຮັດໃຫ້ຊັກຊ້າ.**

## ການຍົກເລີກການອ້າງສິດ

ທ່ານອາດຍົກເລີກການອ້າງສິດ ຖ້າທ່ານບັນລຸ **ທັງໝົດ** ໃນເກນເງື່ອນໄຂດັ່ງຕໍ່ໄປນີ້:

- ບໍ່ມີການຊຳລະຜົນປະໂຫຍດ.
- ທ່ານບໍ່ຖືກຕັດສິດສຳລັບຜົນປະໂຫຍດ ເນື່ອງຈາກບັນຫາການຮັບສິດ.
- ການຊຳລະເກີນຈຳນວນຍັງບໍ່ຖືກຈັດຕັ້ງຂຶ້ນຕໍ່ການອ້າງສິດ.
- ທ່ານແຈ້ງການໃຫ້ EDD ກ່ອນປີຜົນປະໂຫຍດ 52 ອາທິດຈະສິ້ນສຸດລົງ.

ຫຼັງຈາກທີ່ການອ້າງສິດຖືກຍົກເລີກ, ມັນບໍ່ສາມາດຈັດຕັ້ງຄືນໃໝ່ດ້ວຍວັນທີເລີ່ມຕົ້ນດຽວກັນ. ທ່ານຕ້ອງຍື່ນການອ້າງສິດໃໝ່, ເຊິ່ງຈະມີວັນທີເລີ່ມຕົ້ນທີ່ຊ້າກວ່າ.

## ຜູ້ເຮັດວຽກທີ່ບໍ່ຖືກຄຸ້ມຄອງໂດຍການປະກັນການວ່າງງານ
ໂດຍປົກກະຕິແລ້ວ, ກຸ່ມຜູ້ເຮັດວຽກດັ່ງຕໍ່ໄປນີ້ແມ່ນບໍ່ຖືກຄຸ້ມຄອງ:

- ເຈົ້າໜ້າທີ່ຜ່ານການເລືອກຕັ້ງ.
- ຄົນເຮັດວຽກອິດສະຫຼະ, ນອກຈາກຈະເຂົ້າຮ່ວມໃນການຄຸ້ມຄອງແບບສະໝັກໃຈ.
- ນັກສຶກສາທີ່ລົງທະບຽນ ແລະ ເຂົ້າຮ່ວມຫ້ອງຮຽນຢ່າງເປັນປົກກະຕິທີ່ໂຮງຮຽນ ຫຼື ສະຖາບັນການສຶກສາ ໃນກໍລະນີທີ່ມີການຈ້າງງານ.
- ສະມາຊິກຂອງບໍລິສັດໜີ້ສິນຈຳກັດ (LLC) ທີ່ຖືວ່າເປັນຜູ້ຮ່ວມຫຸ້ນສຳລັບຈຸດປະສົງໃນການລາຍງານອາກອນລາຍໄດ້ຂອງລັດຖະບານກາງ.
- ຄູ່ສົມລົດຂອງນັກສຶກສາທີ່ກຳລັງເຮັດວຽກສຳລັບສະຖາບັນການສຶກສາໃນໂຄງການຈ້າງງານທີ່ຖືກສະໜອງໃຫ້ສຳລັບຈຸດປະສົງໃນການໃຫ້ຄວາມຊ່ວຍເຫຼືອທາງການເງິນແກ່ນັກສຶກສາ.
- ພໍ່ແມ່ທີ່ຈະຈັດຈ້າງໂດຍລູກຂອງພວກເຂົາ.
- ສາມີ ແລະ ພັນລະເມຍທີ່ຈັດຈ້າງກັນເອງ.
- ຄົນຂາຍຄົນໃດໜຶ່ງທີ່ໄດ້ຮັບໃບອະນຸຍາດຈາກລັດ ເຊິ່ງໄດ້ຮັບການຊຳລະເປັນຄ່າທຳນຽມເທົ່ານັ້ນ.
- ຜູ້ຮັບຈ້າງງານເລັກນ້ອຍ ແລະ ຄົນນຳທາງ.

ຖ້າທ່ານບໍ່ຮູ້ວ່າທ່ານຖືກຄຸ້ມຄອງ ຫຼື ບໍ່, ຢ່າສະລະສິດຂອງທ່ານ. ໃຫ້ຕິດຕໍ່ EDD ສຳລັບຂໍ້ມູນເພີ່ມເຕີມ.

## ການຄຸ້ມຄອງແບບສະໝັກໃຈ
ພາຍໃຕ້ເງື່ອນໄຂໃດໜຶ່ງ, ຜູ້ຈ້າງງານຂອງບຸກຄົນທີ່ບໍ່ມີການບໍລິການເຊິ່ງບໍ່ຖືກຄຸ້ມຄອງອາດເລືອກທີ່ຈະຄຸ້ມຄອງການບໍລິການເຫຼົ່ານັ້ນ. ຖ້າທ່ານບໍ່ແນ່ໃຈວ່າທ່ານມີສິດສຳລັບຜົນປະໂຫຍດເຫຼົ່ານີ້ ຫຼື ບໍ່, ໃຫ້ຕິດຕໍ່ EDD.

## ຮ້ອງຂໍແບບພິມການອ້າງສິດ
ທ່ານອາດຮ້ອງຂໍແບບພິມສຳລັບການອ້າງສິດຂອງທ່ານຜ່ານໜຶ່ງໃນວິທີການດັ່ງຕໍ່ໄປນີ້:

- ສ້າງບັນຊີໂດຍໄປທີ່ UI Online (edd.ca.gov/UI_Online). ເລືອກ **Claim History** ແລະ ສັ່ງພິມ.
- ໂທຫາ EDD ທີ່ໝາຍເລກ 1-800-300-5616.

## ໂຄງການພິເສດ
### ຜົນປະໂຫຍດການຝຶກອົບຮົມໃນລັດຄາລິຟໍເນຍ (CTB)
ຖ້າທ່ານກຳລັງເຂົ້າຮ່ວມໂຮງຮຽນ ຫຼື ການຝຶກອົບຮົມ ໃນຂະນະທີ່ກຳລັງໄດ້ຮັບຜົນປະໂຫຍດ UI, ທ່ານອາດມີຄຸນສົມບັດສຳລັບ CTB.

ຖ້າມີສິດໄດ້ຮັບ, ທ່ານສາມາດກ້າວໜ້າໃນການສຶກສາຂອງທ່ານ, ຍົກລະດັບທັກສະຂອງທ່ານ ແລະ/ຫຼື ຮຽນຮູ້ການຄ້າຂາຍໃໝ່ ໃນຂະນະທີ່ກຳລັງເຂົ້າຮ່ວມໂຄງການຝຶກອົບຮົມ ຫຼື ໂຮງຮຽນທີ່ຜ່ານການຮອງຮັບຈາກ EDD ເພື່ອທີ່ຈະເກັ່ງຫຼາຍຂຶ້ນໃນຕະຫຼາດແຮງງານໃນມື້ນີ້.

ໃນຂະນະທີ່ຢູ່ໃນໂຮງຮຽນ ຫຼື ການຝຶກອົບຮົມ, ທ່ານຈະຖືກຍົກເວັ້ນຈາກຂໍ້ກຳນົດຕ່າງໆ ເພື່ອພ້ອມເຮັດວຽກ, ຊອກຫາວຽກຢ່າງກະຕືລືລົ້ນ ແລະ ຮັບວຽກ. ທ່ານອາດຍັງມີສິດໄດ້ຮັບອາທິດເພີ່ມສຳລັບຜົນປະໂຫຍດ. ຮຽນຮູ້ເພີ່ມເຕີມທາງອອນລາຍໂດຍໄປທີ່ California

Training Benefits (edd.ca.gov/unemployment/California_Training_Benefits.htm).

**ໝາຍເຫດ:** EDD ບໍ່ ຄຸ້ມຄອງຄ່າໃຊ້ຈ່າຍໃດໜຶ່ງທີ່ກ່ຽວຂ້ອງກັບການສຶກສາ ຫຼື ການຝຶກອົບຮົມ ເຊັ່ນ: ຄ່າຮຽນ, ຄ່າໜັງສື, ຄ່າອຸປະກອນ ຫຼື ຄ່າເດີນທາງ. ເຖິງຢ່າງໃດກໍ່ຕາມ, ມີໂຄງການຂອງລັດ, ຂອງລັດຖະບານກາງ ຫຼື ຂອງຜູ້ຈ້າງງານທີ່ອາດສະໜອງທຶນໃຫ້ແກ່ໂຮງຮຽນ ຫຼື ການຝຶກອົບຮົມຂອງທ່ານ.

## ການຂະຫຍາຍການຝຶກອົບຮົມ (TE)

TE ໃຫ້ຜົນປະໂຫຍດເພີ່ມເຕີມແກ່ບຸກຄົນທີ່ຜ່ານການຮອງຮັບສຳລັບ CTB, ໃນຂະນະທີ່ສຳເລັດໂຮງຮຽນ ຫຼື ການຝຶກອົບຮົມ. ມີພຽງແຕ່ TE ໂຄງການທີ່ອະນຸຍາດສຳລັບຊ່ວງການຝຶກອົບຮົມແຕ່ລະຄັ້ງທີ່ຜ່ານການຮອງຮັບໂດຍ CTB.

ຖ້າສົນໃຈ, ທ່ານຕ້ອງຕິດຕໍ່ EDD ເພື່ອສອບຖາມກ່ຽວກັບ TE ກ່ອນທີ່ຈະຮັບອາທິດທີ 16 ຂອງຜົນປະໂຫຍດ UI. ສຳລັບການອ້າງສິດທີ່ມີໄລຍະເວລາຕ່ຳກວ່າ 16 ອາທິດຂອງຜົນປະໂຫຍດ, ທ່ານ **ຕ້ອງ** ຕິດຕໍ່ EDD ກ່ອນທີ່ການອ້າງສິດຈະໄປຮອດຍອດເຫຼືອທີ່ເປັນສູນ.

## ການຊ່ວຍເຫຼືອການວ່າງງານຈາກໄພພິບັດ (DUA)

ໂຄງການ DUA ຂອງລັດຖະບານກາງໃຫ້ຄວາມຊ່ວຍເຫຼືອທາງການເງິນແກ່ບຸກຄົນທີ່ມີການຈ້າງງານ ຫຼື ການເຮັດວຽກອິດສະຫຼະເຊິ່ງເກີດມີການສູນເສຍ ຫຼື ການຂັດຂວາງ ໂດຍເປັນຜົນໂດຍກົງຈາກໄພພິບັດຄັ້ງໃຫຍ່ ແລະ ບຸກຄົນທີ່ ບໍ່ ມີສິດສຳລັບຜົນປະໂຫຍ UI ແບບປົກກະຕິ. ຜົນປະໂຫຍດເຫຼົ່ານີ້ແມ່ນມີໃຫ້ ເມື່ອປະທານາທິບໍດີແຫ່ງສະຫະລັດອາເມຣິກາປະກາດໄພພິບັດຄັ້ງໃຫຍ່ ແລະ ເຮັດໃຫ້ມີຄວາມຊ່ວຍເຫຼືອທີ່ພິເສດນີ້.

ຖ້າມີຜົນປະໂຫຍດ DUA, ຂໍ້ມູນຈະຖືກຕິດແປະໃນເວບໄຊ EDD (edd.ca.gov).

## ການຊ່ວຍເຫຼືອເພື່ອດັດສົມການຄ້າຂາຍ (TAA)/ການຊ່ວຍເຫຼືອເພື່ອດັດສົມການຄ້າຂາຍຄືນ (RTAA)

ໂຄງການ TAA ແມ່ນໂຄງການທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານກາງ ເຊິ່ງໃຫ້ການຝຶກອົບຮົມ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງກັບການຝຶກອົບຮົມ ແລະ ການບໍລິການແກ່ຜູ້ເຮັດວຽກທີ່ຖືກຢັ້ງຢືນໂດຍ Department of Labor ແຫ່ງສະຫະລັດອາເມຣິກາວ່າເປັນການສູນເສຍວຽກຂອງພວກເຂົາ ຫຼື ຖືກຫຼຸດຊົ່ວໂມງເຮັດວຽກ ແລະ ຄ່າຈ້າງຂອງພວກເຂົາ, ເປັນຜົນຈາກການນຳເຂົ້າທີ່ເພີ່ມຂຶ້ນ ຫຼື ການປ່ຽນແປງດ້ານການຜະລິດໄປຢູ່ຕ່າງປະເທດ.

ໂຄງການ RTAA ໃຫ້ເງິນອຸດໜູນຄ່າຈ້າງແກ່ບຸກຄົນທີ່ມີອາຍຸ 50 ປີ ຫຼື ສູງກວ່ານັ້ນ ເຊິ່ງກັບໄປເຮັດວຽກທີ່ໄດ້ຮັບຄ່າຈ້າງໜ້ອຍກວ່າການຈ້າງງານກ່ອນໜ້າຂອງພວກເຂົາທີ່ໄດ້ຮັບຜົນກະທົບ.

## ຜົນປະໂຫຍດຂະຫຍາຍ

ຜົນປະໂຫຍດຂະຫຍາຍແມ່ນມີໃຫ້ແກ່ຜູ້ເຮັດວຽກທີ່ໝົດຜົນປະໂຫຍດການວ່າງງານແບບປົກກະຕິ ເມື່ອອັດຕາການວ່າງງານເທົ່າກັບ ຫຼື ມີຫຼາຍກວ່າເປີເຊັນໃດໜຶ່ງທີ່ຖືກກຳນົດໂດຍກົດໝາຍຂອງລັດ ແລະ/ຫຼື ກົດໝາຍຂອງລັດຖະບາງການ ຫຼື ເມື່ອລັດຖະບານກາງຮອງຮັບນິຕິກຳກ່ຽວກັບຜົນປະໂຫຍດຂະຫຍາຍທີ່ພິເສດ.

## ຜົນປະໂຫຍດການວ່າງງານສຳລັບຜູ້ເຮັດວຽກກັບລາງລົດໄຟ

ຜູ້ເຮັດວຽກກັບລາງລົດໄຖອາດອ້າງສິດຂໍຜົນປະໂຫຍດພາຍໃຕ້ Railroad Unemployment Insurance Act ຂອງສະຫະລັດອາເມຣິກາ. ໂຄງການນີ້ແມ່ນຖືກກຳກັບໂດຍ Railroad Retirement Board (RRB) ຂອງສະຫະລັດອາເມຣິກາ.

ເພື່ອຍື່ນອ້າງສິດ, ໃຫ້ໂທຫາໝາຍເລກໂທລະສັບທີ່ 1-877-772-5772 ລະຫວ່າງ 9 ໂມງເຊົ້າ ແລະ 3:30 ໂມງແລງ, ວັນຈັນຮອດວັນສຸກ ເພື່ອລົມກັບຕົວແທນ RRB ຫຼື ຍື່ນທາງອອນລາຍໂດຍໄປທີ່ RRB (rrb.gov).

## ການປ້ອງກັນ ແລະ ການກວດຈັບການສໍ້ໂກງໃນການປະກັນການວ່າງງານ

EDD ຈິງຈັງກັບຄວາມປອດໄພຂອງຂໍ້ມູນສ່ວນບຸກຄົນ ແລະ ຂໍ້ມູນລັບຫຼາຍ. ສະນັ້ນ, ຂໍ້ມູນທັງໝົດທີ່ຖືກຍື່ນໃຫ້ພວກເຮົາແມ່ນຖືກເຂົ້າລະຫັດລັບ. ການປ້ອງກັນເພີ່ມເຕີມແມ່ນຖືກສ້າງຂຶ້ນເພື່ອປ້ອງກັນຂໍ້ມູນສ່ວນບຸກຄົນຂອງທ່ານຈາກການສໍ້ໂກງຂອງມິດສາຊີບ ແລະ ການລັກຂໍ້ມູນລະບຸຕົວຕົນ.

ການສໍ້ໂກງຂອງມິດສາຊີບເກີດຂຶ້ນເມື່ອຄົນໃດໜຶ່ງຕັ້ງໃຈຍື່ນອ້າງສິດ UI ໂດຍໃຊ້ຂໍ້ມູນການຈ້າງງານ ຫຼື ຂໍ້ມູນສ່ວນບຸກຄົນຂອງຄົນອື່ນ. EDD ສືບສວນຄະດີການສໍ້ໂກງຂອງມິດສາຊີບ ແລະ ມຸ່ງໝັ້ນທີ່ຈະປົກປ້ອງຕົວຕົນຂອງຜູ້ຮ້ອງສິດຕາມກົດໝາຍ.

ຖ້າ EDD ສົງໄສວ່າອາດມີບັນຫາກ່ຽວກັບຂໍ້ມູນລະບຸຕົວຕົນ, ທ່ານຈະໄດ້ຮັບຄໍາຮ້ອງເປັນລາຍລັກອັກສອນເພື່ອຢືນຢັນຂໍ້ມູນທີ່ສະໜອງໃຫ້. ພວກເຮົາຍັງຕິດຕໍ່ຜູ້ຈ້າງງານກ່ອນໜ້າຂອງທ່ານ ແລະ ໜ່ວຍງານລັດຖະບານ ເພື່ອຢືນຢັນເອກະສານ ແລະ ຂໍ້ມູນໃດໜຶ່ງທີ່ທ່ານສະໜອງໃຫ້.

ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ດາວໂຫຼດໃບປິວ *Protect Your Identity and Stop Unemployment Insurance Imposter Fraud (DE 2360EE) (PDF)* (edd.ca.gov/pdf_pub_ctr/de2360ee.pdf).

ເພື່ອລາຍງານການສໍ້ໂກງກ່ຽວກັບ UI, ໃຫ້ໄປທີ່ Ask EDD (askedd.edd.ca.gov) ແລະ ເລືອກ **Report Fraud** ເພື່ອຍື່ນ Fraud Reporting Form ທາງອອນລາຍ ຫຼື ໂທຫາສາຍດ່ວນໂທລະສັບຂອງ EDD ທີ່ 1-800-229-6297.

## ການລົງໂທດ

ການຖະແຫຼງການຜິດ ຫຼື ການກັກຂໍ້ມູນເພື່ອຮັບຜົນປະໂຫຍດສາມາດເປັນອາຊະຍາກໍາ. ການລົງໂທດອາດປະກອບມີການປັບໄໝ, ການຕັດສິດຈາກການຖະແຫຼງການຜິດ ແລະ/ຫຼື ການຮ້ອງຟ້ອງທາງອາຍາ.

ການຕັດສິນຈາກການຖະແຫຼງການຜິດປະຕິເສດຜົນປະໂຫຍດນັບຕັ້ງແຕ່ 2 ຫາ 23 ອາທິດ. ການຕັດສິດຍັງຈະຢູ່ໃນການບັນທຶກຂອງທ່ານເປັນເວລາສາມປີ ຫຼື ຈົນກວ່າຈະໃຊ້, ເຊິ່ງຈະເລືອກຕາມກໍລະນີທີ່ເກີດຂຶ້ນກ່ອນ. ເພື່ອໃຊ້ໃນອາທິດການຖະແຫຼງການຜິດ, ທ່ານຕ້ອງສືບຕໍ່ຢືນຢັນຜົນປະໂຫຍດ UI ແລະ ບັນລຸເກນເງື່ອນໄຂອື່ນໆທັງໝົດ. ທ່ານຈະບໍ່ໄດ້ຮັບການຊໍາລະໃນລະຫວ່າງເວລານີ້.

## ການກວດສອບຜົນປະໂຫຍດ

EDD ດໍາເນີນການກວດສອບໂດຍການຈັບຄູ່ຂໍ້ມູນຈາກຜູ້ຈ້າງງານກັບຂໍ້ມູນອ້າງສິດ UI ເພື່ອກໍານົດວ່າຜູ້ອ້າງສິດລາຍງານວຽກງານ, ຄ່າຈ້າງ ແລະ ລາຍໄດ້ອື່ນໆທັງໝົດໃຫ້ EDD ຢ່າງຖືກຕ້ອງ ໃນຂະນະທີ່ກໍາລັງເກັບກໍາຜົນປະໂຫຍດ UI. ການຊໍາລະເກີນຈໍານວນ ແລະ ການລົງໂທດທີ່ຖືກເກັບກໍາຈາກການກວດສອບເຫຼົ່ານີ້ຮັບປະກັນຄວາມສາມາດຊໍາລະໜີ້ຂອງ UI Trust Fund ແລະ ຊ່ວຍຫຼຸດອາກອນ UI.

## ການຢືນຢັນໝາຍເລກປະກັນສັງຄົມ

EDD ອາດຮຽກຮ້ອງໃຫ້ທ່ານຢືນຢັນໝາຍເລກປະກັນສັງຄົມ (SSN) ຂອງທ່ານຕາມທີ່ຖືກກໍານົດອອກໃຫ້ແກ່ທ່ານໂດຍ Social Security Administration (SSA).

ສິດໄດ້ຮັບຜົນປະໂຫຍດຂອງທ່ານອາດໄດ້ຮັບຜົນກະທົບ ຖ້າ:

- SSN ທີ່ສະໜອງໃຫ້ແມ່ນຖືກມອບໝາຍໃຫ້ຊື່ຕ່າງຫາກ ຫຼື ເປັນຂອງບຸກຄົນອື່ນ.
- SSN ບໍ່ຖືກຕ້ອງ.
- SSN ບໍ່ເຄີຍຖືກກຳນົດອອກໂດຍ SSA.
- ຄ່າຈ້າງໃນຊ່ວງເວລາຖານເປັນຂອງບຸກຄົນອື່ນ.
- ວັນເກີດໃນ SSA ແມ່ນແຕກຕ່າງຈາກວັນເກີດທີ່ທ່ານສະໜອງໃຫ້ ເມື່ອທ່ານຍື່ນການອ້າງສິດຂອງທ່ານ.

ຖ້າ EDD ຮຽກຮ້ອງໃຫ້ທ່ານຢືນຢັນ SSN ຂອງທ່ານ, ທ່ານອາດຖືກຖາມເພື່ອຂໍໃຫ້ຍື່ນສຳເນົາທີ່ຄົບຖ້ວນຂອງໃບລາຍງານການປະກັນສັງຄົມປະຈຳປີຂອງທ່ານ. ເພື່ອຮັບເອົາສຳເນົາທີ່ຄົບຖ້ວນຂອງໃບລາຍງານການປະກັນສັງຄົມ, ໃຫ້ໄປທີ່ SSA ອອນລາຍ (ssa.gov).

ສຳເນົາຂອງບັດປະກັນສັງຄົມຂອງທ່ານຈະບໍ່ບັນລຸເງື່ອນໄຂໃນຂໍ້ກຳນົດນີ້.

## ການປະກັນຄົນພິການຂອງລັດ (SDI)

SDI ປະກອບມີການປະກັນຄົນພິການ (DI) ແລະ ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ (PFL). ໂຄງການດັ່ງກ່າວຖືກສະໜອງທຶນໂດຍຜູ້ເຮັດວຽກໃນລັດຄາລິຟໍເນຍທັງໝົດຜ່ານການຫັກເງິນຄ່າຈ້າງຂອງພະນັກງານ, ໂດຍຖືກບັນທຶກວ່າເປັນ CASDI ໃນສິ້ນຈ່າຍເງິນ.

**ການຍົກເວັ້ນ:**

- ພະນັກງານຂອງໜ່ວຍງານສາທາລະນະໃນທ້ອງຖິ່ນ (ຍົກເວັ້ນຜູ້ເຮັດວຽກໃນໂຮງຮຽນປະຈຳເຂດປົກຄອງ) ແມ່ນບໍ່ຖືກຄຸ້ມຄອງໂດຍ SDI ນອກຈາກຜູ້ຈ້າງງານຈະເລືອກຕັ້ງການຄຸ້ມຄອງດັ່ງກ່າວ.
- ພະນັກງານຂອງລັດ ຫຼື ສະຖາບັນທີ່ຖືກສະໜອງທຶນໃຫ້ໂດຍລັດໃນການສຶກສາຊັ້ນສູງ, ຜ່ານຫົວໜ່ວຍຕໍ່ລອງແບບສະຫະກອນຂອງພວກເຂົາ, ໄດ້ເລືອກຕັ້ງທີ່ຈະຖືກຄຸ້ມຄອງໂດຍ SDI.
- ບຸກຄົນທີ່ເຮັດວຽກອິດສະຫຼະອາດເລືອກຕັ້ງທີ່ຈະຖືກຄຸ້ມຄອງໂດຍ SDI.

ກະລຸນາຮັບຊາບວ່າ: ສະຖານະພົນລະເມືອງ ແລະ ການເຂົ້າເມືອງບໍ່ມີຜົນກະທົບຕໍ່ເງື່ອນໄຂຮັບສິດສຳລັບ SDI.

## ການປະກັນຄົນພິການ (DI)

DI ໃຫ້ຜົນປະໂຫຍດທົດແທນຄ່າຈ້າງໄລຍະສັ້ນ ແລະ ບາງສ່ວນໃຫ້ແກ່ຜູ້ເຮັດວຽກທີ່ມີສິດທີ່ບໍ່ສາມາດເຮັດວຽກເນື່ອງຈາກຄວາມເຈັບປ່ວຍທີ່ບໍ່ກ່ຽວຂ້ອງກັບວຽກງານ, ການບາດເຈັບ ຫຼື ການຖືພາ.

**ຈະຍື່ນອ້າງສິດໃນເມື່ອໃດ:** ຍື່ນການອ້າງສິດຂອງທ່ານບໍ່ໃຫ້ກາຍເກົ້າມື້ຫຼັງຈາກມື້ທຳອິດທີ່ສະຖານະຄວາມພິການຂອງທ່ານເລີ່ມຕົ້ນ, ແຕ່ບໍ່ໃຫ້ກາຍ 49 ມື້ ຫຼັງຈາກທີ່ສະຖານະຄວາມພິການຂອງທ່ານເລີ່ມຕົ້ນ ຫຼື ທ່ານອາດສູນເສຍຜົນປະໂຫຍດ.

ສຳລັບການປະມວນຜົນທີ່ໄວຂຶ້ນ, ໃຫ້ຍື່ນອ້າງສິດຂອງທ່ານໂດຍໃຊ້ SDI Online.

**ການຍົກເວັ້ນ:** ຖ້າມີການຍື່ນອ້າງສິດສຳລັບສາຍເຫດດຽວກັນ ຫຼື ສາຍເຫດທີ່ກ່ຽວຂ້ອງກັນ ຫຼື ເງື່ອນໄຂທີ່ຢູ່ພາຍໃນ 60 ມື້ຫຼັງຈາກການອ້າງສິດໃນເບື້ອງຕົ້ນ, ມັນຈະບໍ່ມີຊ່ວງເວລາລໍຖ້າໃໝ່.

ເພື່ອຍື່ນການອ້າງສິດ ຫຼື ຮຽນຮູ້ເພີ່ມເຕີມ, ໃຫ້ໄປທີ່ State Disability Insurance (edd.ca.gov/disability). ພະນັກງານຂອງ EDD ແມ່ນພ້ອມໃຫ້ບໍລິການ ນັບຕັ້ງແຕ່ວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 5 ໂມງແລງ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ.

ໄປທີ່ ໜ້າທີ 19 ສໍາລັບລາຍການໝາຍເລກໂທລະສັບຂອງ DI.

## ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ (PFL)

PFL ໃຫ້ຜົນປະໂຫຍດທົດແທນຄ່າຈ້າງໄລຍະສັ້ນ ແລະ ບາງສ່ວນແກ່ຜູ້ເຮັດວຽກທີ່ຈໍາເປັນຕ້ອງລາພັກເພື່ອດູແລລູກ, ພໍ່ແມ່, ພໍ່ແມ່ໃນສົມລົດ, ພໍ່ເຖົ້າແມ່ເຖົ້າ, ຫຼານ, ອ້າຍເອື້ອຍນ້ອງ, ຄູ່ສົມລົດ ຫຼື ຜູ້ຢູ່ຮ່ວມຄອບຄົວດຽວກັນທີ່ຂຶ້ນທະບຽນແລ້ວ ເຊິ່ງເຈັບປ່ວຍຢ່າງຮ້າຍແຮງ. ຜົນປະໂຫຍດແມ່ນມີໃຫ້ແກ່ພໍ່ແມ່ທີ່ຕ້ອງການເວລາເພື່ອເບິ່ງແຍງລູກຄົນໃໝ່ທີ່ເຂົ້າມາສູ່ຄອບຄົວຂອງພວກເຂົາ ບໍ່ວ່າຈະເປັນໂດຍການເກີດ, ການຮັບມາລ້ຽງ ແລະ ການອຸປະຖໍາເພື່ອປັບໃຊ້ການດູແລເບິ່ງ. ຜົນປະໂຫຍດແມ່ນຍັງມີໃຫ້ແກ່ບຸກຄົນທີ່ຕ້ອງການເວລາພັກວຽກ ເພື່ອເຂົ້າຮ່ວມໃນກິດຈະກໍາຄັດເລືອກ ເຊິ່ງເປັນຜົນມາຈາກການທີ່ຄູ່ສົມລົດ, ຜູ້ຢູ່ຮ່ວມຄອບຄົວດຽວກັນທີ່ຂຶ້ນທະບຽນແລ້ວ, ພໍ່ແມ່ ຫຼື ລູກຖືກສົ່ງໄປປະຈໍາການຢູ່ຕ່າງປະເທດ.

**ຈະຍື່ນອ້າງສິດໃນເມື່ອໃດ:** ຍື່ນການອ້າງສິດຂອງທ່ານບໍ່ໃຫ້ມື້ທໍາອິດທີ່ການລາພັກວຽກດ້ວຍເຫດຜົນທາງຄອບຄົວເລີ່ມຕົ້ນ, ແຕ່ບໍ່ໃຫ້ກາຍ 41 ມື້ ຫຼັງຈາກທີ່ການລາພັກວຽກດ້ວຍເຫດຜົນທາງຄອບຄົວຂອງທ່ານເລີ່ມຕົ້ນ ຫຼື ທ່ານອາດສູນເສຍຜົນປະໂຫຍດ.

ສໍາລັບການປະມວນຜົນທີ່ໄວຂຶ້ນ, ໃຫ້ຍື່ນອ້າງສິດຂອງທ່ານໂດຍໃຊ້ SDI Online.

ເພື່ອຍື່ນ ຫຼື ຮຽນຮູ້ເພີ່ມເຕີມ, ໃຫ້ໄປທີ່ Paid Family Leave (edd.ca.gov/Disability/Paid_Family_Leave.htm).

ພະນັກງານຂອງ EDD ແມ່ນພ້ອມໃຫ້ບໍລິການ ນັບຕັ້ງແຕ່ວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 5 ໂມງແລງ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ.

ໄປທີ່ ໜ້າທີ 19 ສໍາລັບລາຍການໝາຍເລກໂທລະສັບຂອງ PFL.

## ການບໍລິການດ້ານແຮງງານ

EDD ໃຫ້ການບໍລິການດ້ານການຈ້າງງານ ແລະ ການຝຶກອົບຮົມທີ່ຫຼາກຫຼາຍ ໂດຍຮ່ວມມືກັບໜ່ວຍງານ ແລະ ອົງກອນຂອງລັດ ແລະ ຂອງທ້ອງຖິ່ນ, ຜ່ານ America's Job Center of California[SM] (AJCC). ການບໍລິການເຫຼົ່ານີ້ສົ່ງຜົນປະໂຫຍດຕໍ່ຜູ້ຊອກຫາວຽກ ແລະ ຜູ້ຈ້າງງານໂດຍບໍ່ເສຍຄ່າ.

ຜ່ານ AJCC, EDD ເຮັດໃຫ້ຜູ້ຊອກຫາວຽກໄດ້ຄົ້ນຫາວຽກ ແລະ ການສໍາມະນາເພື່ອສ້າງຊີວະປະຫວັດທີ່ໃຊ້ສະໝັກເຂົ້າວຽກ, ເຕັກນິກການສໍາພາດ, ຕະຫຼາດນັດພົບແຮງງານ ແລະ ການອ້າງອີງ, ການຝຶກອົບຮົມ ແລະ ອື່ນໆອີກຫຼາຍ. ຜູ້ຈ້າງງານສາມາດໃຊ້ຊຸດລະບົບຂອງພວກເຮົາເພື່ອຊ່ວຍໃນການຄັດເລືອກຜູ້ສະໝັກສໍາລັບຕໍາແໜ່ງທີ່ເປີດວ່າງ, ຝຶກອົບຮົມພະນັກງານໃນປັດຈຸບັນ ແລະ ຈັດຕະຫຼາດນັດພົບແຮງງານ ແລະ ການສໍາມະນາ. ສໍາລັບຂໍ້ມູນເພີ່ມເຕີມ, ໃຫ້ຊອກຫາ AJCC ທີ່ໃກ້ຄຽງທີ່ສຸດກັບທ່ານ ໂດຍໃຊ້ Office Locator ທາງອອນລາຍ (edd.ca.gov/Office_Locator).

## CalJOBS℠

CalJOBS ແມ່ນແຫຼ່ງຊ່ວຍເຫຼືອອອນລາຍຂອງລັດຄາລິຟໍເນຍເພື່ອຊ່ວຍໃຫ້ຜູ້ຊອກຫາວຽກ ແລະ ຜູ້ຈ້າງງານໄດ້ນໍາໃຊ້ການບໍລິການແຮງງານຂອງ EDD. ລະບົບດັ່ງກ່າວເຮັດໃຫ້ຜູ້ໃຊ້ຄົ້ນຫາວຽກຢ່າງງ່າຍດາຍ, ສ້າງຊີວະປະຫວັດທີ່ໃຊ້ສະໝັກເຂົ້າວຽກ, ເຂົ້າເຖິງແຫຼ່ງຊ່ວຍເຫຼືອດ້ານອາຊີບ, ຊອກຫາຜູ້ສະໝັກທີ່ມີຄຸນສົມບັດສໍາລັບການຈ້າງງານ ແລະ ເກັບກໍາຂໍ້ມູນກ່ຽວກັບການສຶກສາ ແລະ ໂຄງການຝຶກອົບຮົມ.

ຜູ້ຊອກຫາວຽກສາມາດ:

- ສ້າງຊີວະປະຫວັດທີ່ໃຊ້ສະໝັກເຂົ້າວຽກ ຫຼື ອັບໂຫຼດຊີວະປະຫວັດຫຼາຍສະບັບ.
- ຄົ້ນຫາ ແລະ ສະໝັກຕໍາແໜ່ງວຽກທີ່ເປີດ.
- ຕັ້ງຄ່າແຈ້ງເຕືອນສໍາລັບຕໍາແໜ່ງວຽກທີ່ເປີດ.
- ເຮັດການວິໄຈກ່ຽວກັບຜູ້ຈ້າງງານ.
- ສ້າງຊີວະປະຫວັດກໍານົດເອງທີ່ຜູ້ຈ້າງງານສາມາດເຂົ້າເບິ່ງໄດ້.

**ໝາຍເຫດ:** ການລົງທະບຽນສໍາລັບບັນຊີ CalJOBS ແລະ ການຕິດແປະຊີວະປະຫວັດໃນຂໍ້ກໍານົດການຮັບສິດສໍາລັບຜູ້ອ້າງສິດ UI ຫຼາຍຄົນ. ເພື່ອລົງທະບຽນ, ໃຫ້ໄປທີ່ CalJOBS℠ (caljobs.ca.gov).

## ໂຄງການບໍລິການສູ່ພາຍນອກຂອງຜູ້ເຮັດວຽກໃນຟາມທີ່ເປັນຄົນອົບພະຍົບ ແລະ ຕາມລະດູການ (MSFW)

ໂຄງການບໍລິການສູ່ພາຍນອກ MSFW ຊ່ວຍຜູ້ເຮັດວຽກໃນຟາມທີ່ບໍ່ຄຸ້ນເຄີຍກັບການບໍລິການທີ່ຖືກສະໜອງໃຫ້ທີ່ America's Job Center of California℠ ໄດ້ຮັບຂໍ້ມູນກ່ຽວກັບຄວາມຊ່ວຍເຫຼືອໃນການຄົ້ນຫາວຽກ, ການພັດທະນາທັກສະ, ການອ້າງອີງຫາການບໍລິການສະໜັບສະໜູນ, ການປະກັນການວ່າງງານ ແລະ ຄົນພິການ, ຂໍ້ມູນກົດໝາຍແຮງງານກ່ຽວກັບສິດຂອງຜູ້ເຮັດວຽກໃນຟາມ ແລະ ຄູ່ມືອາຊີບ, ໂດຍບໍ່ເສຍຄ່າທັງໝົດ.

## ການບໍລິການສໍາລັບທະຫານຜ່ານເສິກ

EDD ໃຫ້ຄວາມຊ່ວຍເຫຼືອແກ່ທະຫານຜ່ານເສິກ ເພື່ອຊ່ວຍໃຫ້ພວກເຂົາບັນລຸເປົ້າໝາຍໃນການຈ້າງງານ ແລະ ການຝຶກອົບຮົມຂອງພວກເຂົາ. ການບໍລິການປະກອບມີຂໍ້ມູນກ່ຽວກັບຕະຫຼາດແຮງງານ, ການຖືບູລິມະສິດຕະຫຼອດ 24 ຊົ່ວໂມງຂອງທະຫານຜ່ານເສິກໃນລາຍການວຽກທັງໝົດ, ຄວາມຊ່ວຍເຫຼືອໃນການຄົ້ນຫາອາຊີບທີ່ກໍານົດເອງ, ຕະຫຼາດນັດພົບແຮງງານ, ການສໍາມະນາ, ການຄັດເລືອກຜູ້ຈ້າງງານ ແລະ ແຫຼ່ງຊ່ວຍເຫຼືອອື່ນໆ.

## ໂຄງການໂອກາດການຈ້າງງານຂອງໄວໜຸ່ມ (YEOP)

YEOP ໃຫ້ການບໍລິການທີ່ພິເສດເພື່ອຊ່ວຍໃຫ້ໄວໜຸ່ມ, ທີ່ມີອາຍຸ 15 ຫາ 25 ປີ, ບັນລຸເປົ້າໝາຍດ້ານການສຶກສາ ແລະ ດ້ານວິຊາຊີບຂອງພວກເຂົາ. ການບໍລິການປະກອບມີການໃຫ້ຄໍາປຶກສາແບບເພື່ອນ, ການສົ່ງຕໍ່ໃຫ້ການບໍລິການສະໜັບສະໜູນ, ການສໍາມະນາ, ການສົ່ງຕໍ່ໃນວຽກງານ ແລະ ຄວາມຊ່ວຍເຫຼືອໃນການຈັດວາງ ແລະ ການສົ່ງຕໍ່ໃຫ້ການຝຶກອົບຮົມ ແລະ ຄວາມພະຍາຍາມໃນການເຂົ້າເຖິງການບໍລິການສູ່ພາຍນອກຂອງຊຸມຊົນ.

ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄງກາ ແລະ ການບໍລິການທີ່ລະບຸໄວ້ຂ້າງເທິງ, ໃຫ້ໄປທີ່ Jobs and Training ອອນລາຍ (edd.ca.gov/Jobs_and_Training).

# ຕາຕະລາງຜົນປະໂຫຍດການປະກັນການວ່າງງານ
# ສຳລັບການອ້າງສິດໃໝ່ທີ່ເລີ່ມຕົ້ນຈາກວັນທີ 2 ມັງກອນ 2005 ຫຼືຫຼັງຈາກນັ້ນ

| ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ | ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ | ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ |
|---|---|---|---|---|---|
| $ 900.00 – 948.99 | $40 | $ 2,210.01 – 2,236.00 | $86 | $ 3,406.01 – 3,432.00 | $132 |
| 949.00 – 974.99 | 41 | 2,236.01 – 2,262.00 | 87 | 3,432.01 – 3,458.00 | 133 |
| 975.00 – 1,000.99 | 42 | 2,262.01 – 2,288.00 | 88 | 3,458.01 – 3,484.00 | 134 |
| 1,001.00 – 1,026.99 | 43 | 2,288.01 – 2,314.00 | 89 | 3,484.01 – 3,510.00 | 135 |
| 1,027.00 – 1,052.99 | 44 | 2,314.01 – 2,340.00 | 90 | 3,510.01 – 3,536.00 | 136 |
| 1,053.00 – 1,078.99 | 45 | 2,340.01 – 2,366.00 | 91 | 3,536.01 – 3,562.00 | 137 |
| 1,079.00 – 1,117.99 | 46 | 2,366.01 – 2,392.00 | 92 | 3,562.01 – 3,588.00 | 138 |
| 1,118.00 – 1,143.99 | 47 | 2,392.01 – 2,418.00 | 93 | 3,588.01 – 3,614.00 | 139 |
| 1,144.00 – 1,169.99 | 48 | 2,418.01 – 2,444.00 | 94 | 3,614.01 – 3,640.00 | 140 |
| 1,170.00 – 1,195.99 | 49 | 2,444.01 – 2,470.00 | 95 | 3,640.01 – 3,666.00 | 141 |
| 1,196.00 – 1,221.99 | 50 | 2,470.01 – 2,496.00 | 96 | 3,666.01 – 3,692.00 | 142 |
| 1,222.00 – 1,247.99 | 51 | 2,496.01 – 2,522.00 | 97 | 3,692.01 – 3,718.00 | 143 |
| 1,248.00 – 1,286.99 | 52 | 2,522.01 – 2,548.00 | 98 | 3,718.01 – 3,744.00 | 144 |
| 1,287.00 – 1,312.99 | 53 | 2,548.01 – 2,574.00 | 99 | 3,744.01 – 3,770.00 | 145 |
| 1,313.00 – 1,338.99 | 54 | 2,574.01 – 2,600.00 | 100 | 3,770.01 – 3,796.00 | 146 |
| 1,339.00 – 1,364.99 | 55 | 2,600.01 – 2,626.00 | 101 | 3,796.01 – 3,822.00 | 147 |
| 1,365.00 – 1,403.99 | 56 | 2,626.01 – 2,652.00 | 102 | 3,822.01 – 3,848.00 | 148 |
| 1,404.00 – 1,429.99 | 57 | 2,652.01 – 2,678.00 | 103 | 3,848.01 – 3,874.00 | 149 |
| 1,430.00 – 1,455.99 | 58 | 2,678.01 – 2,704.00 | 104 | 3,874.01 – 3,900.00 | 150 |
| 1,456.00 – 1,494.99 | 59 | 2,704.01 – 2,730.00 | 105 | 3,900.01 – 3,926.00 | 151 |
| 1,495.00 – 1,520.99 | 60 | 2,730.01 – 2,756.00 | 106 | 3,926.01 – 3,952.00 | 152 |
| 1,521.00 – 1,546.99 | 61 | 2,756.01 – 2,782.00 | 107 | 3,952.01 – 3,978.00 | 153 |
| 1,547.00 – 1,585.99 | 62 | 2,782.01 – 2,808.00 | 108 | 3,978.01 – 4,004.00 | 154 |
| 1,586.00 – 1,611.99 | 63 | 2,808.01 – 2,834.00 | 109 | 4,004.01 – 4,030.00 | 155 |
| 1,612.00 – 1,637.99 | 64 | 2,834.01 – 2,860.00 | 110 | 4,030.01 – 4,056.00 | 156 |
| 1,638.00 – 1,676.99 | 65 | 2,860.01 – 2,886.00 | 111 | 4,056.01 – 4,082.00 | 157 |
| 1,677.00 – 1,702.99 | 66 | 2,886.01 – 2,912.00 | 112 | 4,082.01 – 4,108.00 | 158 |
| 1,703.00 – 1,741.99 | 67 | 2,912.01 – 2,938.00 | 113 | 4,108.01 – 4,134.00 | 159 |
| 1,742.00 – 1,767.99 | 68 | 2,938.01 – 2,964.00 | 114 | 4,134.01 – 4,160.00 | 160 |
| 1,768.00 – 1,806.99 | 69 | 2,964.01 – 2,990.00 | 115 | 4,160.01 – 4,186.00 | 161 |
| 1,807.00 – 1,832.99 | 70 | 2,990.01 – 3,016.00 | 116 | 4,186.01 – 4,212.00 | 162 |
| 1,833.00 – 1,846.00 | 71 | 3,016.01 – 3,042.00 | 117 | 4,212.01 – 4,238.00 | 163 |
| 1,846.01 – 1,872.00 | 72 | 3,042.01 – 3,068.00 | 118 | 4,238.01 – 4,264.00 | 164 |
| 1,872.01 – 1,898.00 | 73 | 3,068.01 – 3,094.00 | 119 | 4,264.01 – 4,290.00 | 165 |
| 1,898.01 – 1,924.00 | 74 | 3,094.01 – 3,120.00 | 120 | 4,290.01 – 4,316.00 | 166 |
| 1,924.01 – 1,950.00 | 75 | 3,120.01 – 3,146.00 | 121 | 4,316.01 – 4,342.00 | 167 |
| 1,950.01 – 1,976.00 | 76 | 3,146.01 – 3,172.00 | 122 | 4,342.01 – 4,368.00 | 168 |
| 1,976.01 – 2,002.00 | 77 | 3,172.01 – 3,198.00 | 123 | 4,368.01 – 4,394.00 | 169 |
| 2,002.01 – 2,028.00 | 78 | 3,198.01 – 3,224.00 | 124 | 4,394.01 – 4,420.00 | 170 |
| 2,028.01 – 2,054.00 | 79 | 3,224.01 – 3,250.00 | 125 | 4,420.01 – 4,446.00 | 171 |
| 2,054.01 – 2,080.00 | 80 | 3,250.01 – 3,276.00 | 126 | 4,446.01 – 4,472.00 | 172 |
| 2,080.01 – 2,106.00 | 81 | 3,276.01 – 3,302.00 | 127 | 4,472.01 – 4,498.00 | 173 |
| 2,106.01 – 2,132.00 | 82 | 3,302.01 – 3,328.00 | 128 | 4,498.01 – 4,524.00 | 174 |
| 2,132.01 – 2,158.00 | 83 | 3,328.01 – 3,354.00 | 129 | 4,524.01 – 4,550.00 | 175 |
| 2,158.01 – 2,184.00 | 84 | 3,354.01 – 3,380.00 | 130 | 4,550.01 – 4,576.00 | 176 |
| 2,184.01 – 2,210.00 | 85 | 3,380.01 – 3,406.00 | 131 | 4,576.01 – 4,602.00 | 177 |

## ຕາຕະລາງຜົນປະໂຫຍດການປະກັນການວ່າງງານ
## ສຳລັບການອ້າງສິດໃໝ່ທີ່ເລີ່ມຕົ້ນຈາກວັນທີ 2 ມັງກອນ 2005 ຫຼືຫຼັງຈາກນັ້ນ

| ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ | ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ | ຈຳນວນຄ່າຈ້າງ ໃນໄຕມາດທີ່ສູງທີ່ສຸດ | ຈຳນວນຜົນ ປະໂຫຍດ ປະຈຳອາທິດ |
|---|---|---|---|---|---|
| $ 4,602.01 – 4,628.00 | $178 | $ 5,798.01 – 5,824.00 | $224 | $ 6,994.01 – 7,020.00 | $270 |
| 4,628.01 – 4,654.00 | 179 | 5,824.01 – 5,850.00 | 225 | 7,020.01 – 7,046.00 | 271 |
| 4,654.01 – 4,680.00 | 180 | 5,850.01 – 5,876.00 | 226 | 7,046.01 – 7,072.00 | 272 |
| 4,680.01 – 4,706.00 | 181 | 5,876.01 – 5,902.00 | 227 | 7,072.01 – 7,098.00 | 273 |
| 4,706.01 – 4,732.00 | 182 | 5,902.01 – 5,928.00 | 228 | 7,098.01 – 7,124.00 | 274 |
| 4,732.01 – 4,758.00 | 183 | 5,928.01 – 5,954.00 | 229 | 7,124.01 – 7,150.00 | 275 |
| 4,758.01 – 4,784.00 | 184 | 5,954.01 – 5,980.00 | 230 | 7,150.01 – 7,176.00 | 276 |
| 4,784.01 – 4,810.00 | 185 | 5,980.01 – 6,006.00 | 231 | 7,176.01 – 7,202.00 | 277 |
| 4,810.01 – 4,836.00 | 186 | 6,006.01 – 6,032.00 | 232 | 7,202.01 – 7,228.00 | 278 |
| 4,836.01 – 4,862.00 | 187 | 6,032.01 – 6,058.00 | 233 | 7,228.01 – 7,254.00 | 279 |
| 4,862.01 – 4,888.00 | 188 | 6,058.01 – 6,084.00 | 234 | 7,254.01 – 7,280.00 | 280 |
| 4,888.01 – 4,914.00 | 189 | 6,084.01 – 6,110.00 | 235 | 7,280.01 – 7,306.00 | 281 |
| 4,914.01 – 4,940.00 | 190 | 6,110.01 – 6,136.00 | 236 | 7,306.01 – 7,332.00 | 282 |
| 4,940.01 – 4,966.00 | 191 | 6,136.01 – 6,162.00 | 237 | 7,332.01 – 7,358.00 | 283 |
| 4,966.01 – 4,992.00 | 192 | 6,162.01 – 6,188.00 | 238 | 7,358.01 – 7,384.00 | 284 |
| 4,992.01 – 5,018.00 | 193 | 6,188.01 – 6,214.00 | 239 | 7,384.01 – 7,410.00 | 285 |
| 5,018.01 – 5,044.00 | 194 | 6,214.01 – 6,240.00 | 240 | 7,410.01 – 7,436.00 | 286 |
| 5,044.01 – 5,070.00 | 195 | 6,240.01 – 6,266.00 | 241 | 7,436.01 – 7,462.00 | 287 |
| 5,070.01 – 5,096.00 | 196 | 6,266.01 – 6,292.00 | 242 | 7,462.01 – 7,488.00 | 288 |
| 5,096.01 – 5,122.00 | 197 | 6,292.01 – 6,318.00 | 243 | 7,488.01 – 7,514.00 | 289 |
| 5,122.01 – 5,148.00 | 198 | 6,318.01 – 6,344.00 | 244 | 7,514.01 – 7,540.00 | 290 |
| 5,148.01 – 5,174.00 | 199 | 6,344.01 – 6,370.00 | 245 | 7,540.01 – 7,566.00 | 291 |
| 5,174.01 – 5,200.00 | 200 | 6,370.01 – 6,396.00 | 246 | 7,566.01 – 7,592.00 | 292 |
| 5,200.01 – 5,226.00 | 201 | 6,396.01 – 6,422.00 | 247 | 7,592.01 – 7,618.00 | 293 |
| 5,226.01 – 5,252.00 | 202 | 6,422.01 – 6,448.00 | 248 | 7,618.01 – 7,644.00 | 294 |
| 5,252.01 – 5,278.00 | 203 | 6,448.01 – 6,474.00 | 249 | 7,644.01 – 7,670.00 | 295 |
| 5,278.01 – 5,304.00 | 204 | 6,474.01 – 6,500.00 | 250 | 7,670.01 – 7,696.00 | 296 |
| 5,304.01 – 5,330.00 | 205 | 6,500.01 – 6,526.00 | 251 | 7,696.01 – 7,722.00 | 297 |
| 5,330.01 – 5,356.00 | 206 | 6,526.01 – 6,552.00 | 252 | 7,722.01 – 7,748.00 | 298 |
| 5,356.01 – 5,382.00 | 207 | 6,552.01 – 6,578.00 | 253 | 7,748.01 – 7,774.00 | 299 |
| 5,382.01 – 5,408.00 | 208 | 6,578.01 – 6,604.00 | 254 | 7,774.01 – 7,800.00 | 300 |
| 5,408.01 – 5,434.00 | 209 | 6,604.01 – 6,630.00 | 255 | 7,800.01 – 7,826.00 | 301 |
| 5,434.01 – 5,460.00 | 210 | 6,630.01 – 6,656.00 | 256 | 7,826.01 – 7,852.00 | 302 |
| 5,460.01 – 5,486.00 | 211 | 6,656.01 – 6,682.00 | 257 | 7,852.01 – 7,878.00 | 303 |
| 5,486.01 – 5,512.00 | 212 | 6,682.01 – 6,708.00 | 258 | 7,878.01 – 7,904.00 | 304 |
| 5,512.01 – 5,538.00 | 213 | 6,708.01 – 6,734.00 | 259 | 7,904.01 – 7,930.00 | 305 |
| 5,538.01 – 5,564.00 | 214 | 6,734.01 – 6,760.00 | 260 | 7,930.01 – 7,956.00 | 306 |
| 5,564.01 – 5,590.00 | 215 | 6,760.01 – 6,786.00 | 261 | 7,956.01 – 7,982.00 | 307 |
| 5,590.01 – 5,616.00 | 216 | 6,786.01 – 6,812.00 | 262 | 7,982.01 – 8,008.00 | 308 |
| 5,616.01 – 5,642.00 | 217 | 6,812.01 – 6,838.00 | 263 | 8,008.01 – 8,034.00 | 309 |
| 5,642.01 – 5,668.00 | 218 | 6,838.01 – 6,864.00 | 264 | 8,034.01 – 8,060.00 | 310 |
| 5,668.01 – 5,694.00 | 219 | 6,864.01 – 6,890.00 | 265 | 8,060.01 – 8,086.00 | 311 |
| 5,694.01 – 5,720.00 | 220 | 6,890.01 – 6,916.00 | 266 | 8,086.01 – 8,112.00 | 312 |
| 5,720.01 – 5,746.00 | 221 | 6,916.01 – 6,942.00 | 267 | 8,112.01 – 8,138.00 | 313 |
| 5,746.01 – 5,772.00 | 222 | 6,942.01 – 6,968.00 | 268 | 8,138.01 – 8,164.00 | 314 |
| 5,772.01 – 5,798.00 | 223 | 6,968.01 – 6,994.00 | 269 | 8,164.01 – 8,190.00 | 315 |

## ຕາຕະລາງຜົນປະໂຫຍດການປະກັນການວ່າງງານ
## ສໍາລັບການອ້າງສິດໃໝ່ທີ່ເລີ່ມຕົ້ນຈາກວັນທີ 2 ມັງກອນ 2005 ຫຼື ຫຼັງຈາກນັ້ນ

| ຈໍານວນຄ່າຈ້າງໃນໄຕມາດທີ່ສູງທີ່ສຸດ | ຈໍານວນຜົນປະໂຫຍດປະຈໍາອາທິດ | ຈໍານວນຄ່າຈ້າງໃນໄຕມາດທີ່ສູງທີ່ສຸດ | ຈໍານວນຜົນປະໂຫຍດປະຈໍາອາທິດ | ຈໍານວນຄ່າຈ້າງໃນໄຕມາດທີ່ສູງທີ່ສຸດ | ຈໍານວນຜົນປະໂຫຍດປະຈໍາອາທິດ |
|---|---|---|---|---|---|
| $ 8,190.01 – 8,216.00 | $316 | $ 9,386.01 – 9,412.00 | $362 | $10,582.01 – 10,608.00 | $408 |
| 8,216.01 – 8,242.00 | 317 | 9,412.01 – 9,438.00 | 363 | 10,608.01 – 10,634.00 | 409 |
| 8,242.01 – 8,268.00 | 318 | 9,438.01 – 9,464.00 | 364 | 10,634.01 – 10,660.00 | 410 |
| 8,268.01 – 8,294.00 | 319 | 9,464.01 – 9,490.00 | 365 | 10,660.01 – 10,686.00 | 411 |
| 8,294.01 – 8,320.00 | 320 | 9,490.01 – 9,516.00 | 366 | 10,686.01 – 10,712.00 | 412 |
| 8,320.01 – 8,346.00 | 321 | 9,516.01 – 9,542.00 | 367 | 10,712.01 – 10,738.00 | 413 |
| 8,346.01 – 8,372.00 | 322 | 9,542.01 – 9,568.00 | 368 | 10,738.01 – 10,764.00 | 414 |
| 8,372.01 – 8,398.00 | 323 | 9,568.01 – 9,594.00 | 369 | 10,764.01 – 10,790.00 | 415 |
| 8,398.01 – 8,424.00 | 324 | 9,594.01 – 9,620.00 | 370 | 10,790.01 – 10,816.00 | 416 |
| 8,424.01 – 8,450.00 | 325 | 9,620.01 – 9,646.00 | 371 | 10,816.01 – 10,842.00 | 417 |
| 8,450.01 – 8,476.00 | 326 | 9,646.01 – 9,672.00 | 372 | 10,842.01 – 10,868.00 | 418 |
| 8,476.01 – 8,502.00 | 327 | 9,672.01 – 9,698.00 | 373 | 10,868.01 – 10,894.00 | 419 |
| 8,502.01 – 8,528.00 | 328 | 9,698.01 – 9,724.00 | 374 | 10,894.01 – 10,920.00 | 420 |
| 8,528.01 – 8,554.00 | 329 | 9,724.01 – 9,750.00 | 375 | 10,920.01 – 10,946.00 | 421 |
| 8,554.01 – 8,580.00 | 330 | 9,750.01 – 9,776.00 | 376 | 10,946.01 – 10,972.00 | 422 |
| 8,580.01 – 8,606.00 | 331 | 9,776.01 – 9,802.00 | 377 | 10,972.01 – 10,998.00 | 423 |
| 8,606.01 – 8,632.00 | 332 | 9,802.01 – 9,828.00 | 378 | 10,998.01 – 11,024.00 | 424 |
| 8,632.01 – 8,658.00 | 333 | 9,828.01 – 9,854.00 | 379 | 11,024.01 – 11,050.00 | 425 |
| 8,658.01 – 8,684.00 | 334 | 9,854.01 – 9,880.00 | 380 | 11,050.01 – 11,076.00 | 426 |
| 8,684.01 – 8,710.00 | 335 | 9,880.01 – 9,906.00 | 381 | 11,076.01 – 11,102.00 | 427 |
| 8,710.01 – 8,736.00 | 336 | 9,906.01 – 9,932.00 | 382 | 11,102.01 – 11,128.00 | 428 |
| 8,736.01 – 8,762.00 | 337 | 9,932.01 – 9,958.00 | 383 | 11,128.01 – 11,154.00 | 429 |
| 8,762.01 – 8,788.00 | 338 | 9,958.01 – 9,984.00 | 384 | 11,154.01 – 11,180.00 | 430 |
| 8,788.01 – 8,814.00 | 339 | 9,984.01 – 10,010.00 | 385 | 11,180.01 – 11,206.00 | 431 |
| 8,814.01 – 8,840.00 | 340 | 10,010.01 – 10,036.00 | 386 | 11,206.01 – 11,232.00 | 432 |
| 8,840.01 – 8,866.00 | 341 | 10,036.01 – 10,062.00 | 387 | 11,232.01 – 11,258.00 | 433 |
| 8,866.01 – 8,892.00 | 342 | 10,062.01 – 10,088.00 | 388 | 11,258.01 – 11,284.00 | 434 |
| 8,892.01 – 8,918.00 | 343 | 10,088.01 – 10,114.00 | 389 | 11,284.01 – 11,310.00 | 435 |
| 8,918.01 – 8,944.00 | 344 | 10,114.01 – 10,140.00 | 390 | 11,310.01 – 11,336.00 | 436 |
| 8,944.01 – 8,970.00 | 345 | 10,140.01 – 10,166.00 | 391 | 11,336.01 – 11,362.00 | 437 |
| 8,970.01 – 8,996.00 | 346 | 10,166.01 – 10,192.00 | 392 | 11,362.01 – 11,388.00 | 438 |
| 8,996.01 – 9,022.00 | 347 | 10,192.01 – 10,218.00 | 393 | 11,388.01 – 11,414.00 | 439 |
| 9,022.01 – 9,048.00 | 348 | 10,218.01 – 10,244.00 | 394 | 11,414.01 – 11,440.00 | 440 |
| 9,048.01 – 9,074.00 | 349 | 10,244.01 – 10,270.00 | 395 | 11,440.01 – 11,466.00 | 441 |
| 9,074.01 – 9,100.00 | 350 | 10,270.01 – 10,296.00 | 396 | 11,466.01 – 11,492.00 | 442 |
| 9,100.01 – 9,126.00 | 351 | 10,296.01 – 10,322.00 | 397 | 11,492.01 – 11,518.00 | 443 |
| 9,126.01 – 9,152.00 | 352 | 10,322.01 – 10,348.00 | 398 | 11,518.01 – 11,544.00 | 444 |
| 9,152.01 – 9,178.00 | 353 | 10,348.01 – 10,374.00 | 399 | 11,544.01 – 11,570.00 | 445 |
| 9,178.01 – 9,204.00 | 354 | 10,374.01 – 10,400.00 | 400 | 11,570.01 – 11,596.00 | 446 |
| 9,204.01 – 9,230.00 | 355 | 10,400.01 – 10,426.00 | 401 | 11,596.01 – 11,622.00 | 447 |
| 9,230.01 – 9,256.00 | 356 | 10,426.01 – 10,452.00 | 402 | 11,622.01 – 11,648.00 | 448 |
| 9,256.01 – 9,282.00 | 357 | 10,452.01 – 10,478.00 | 403 | 11,648.01 – 11,674.00 | 449 |
| 9,282.01 – 9,308.00 | 358 | 10,478.01 – 10,504.00 | 404 | 11,674.01 – ແລະ ຫຼາຍກວ່າ | 450 |
| 9,308.01 – 9,334.00 | 359 | 10,504.01 – 10,530.00 | 405 | | |
| 9,334.01 – 9,360.00 | 360 | 10,530.01 – 10,556.00 | 406 | | |
| 9,360.01 – 9,386.00 | 361 | 10,556.01 – 10,582.00 | 407 | | |

# ວິທີການຂໍຄວາມຊ່ວຍເຫຼືອ
## ອອນລາຍ

- ເພື່ອຮຽນຮູ້ເພີ່ມເຕີມກ່ຽວກັບການບໍລິການ ແລະ ໂຄງການຂອງ EDD, ໃຫ້ໄປທີ່ EDD ທາງອອນລາຍ (edd.ca.gov).
- ເພື່ອຖາມຄຳຖາມກັບພວກເຮົາ, ເຂົ້າເຖິງ UI Online ຫຼື ບັນຊີ SDI ຂອງທ່ານ, ໃຫ້ໄປທີ່ Ask EDD (askedd.edd.ca.gov).
- ເພື່ອຄົ້ນຫາ AJCC ທີ່ໃກ້ຄຽງທີ່ສຸດກັບທ່ານ, ໃຫ້ໄປທີ່ Office Locator ທາງອອນລາຍ (edd.ca.gov/Office_Locator).

## ໂທລະສັບ

ໝາຍເລກໂທລະສັບທັງໝົດຂອງພວກເຮົາແມ່ນສາມາດໂທຟຣີ. ສຳລັບສາຍໂທສິ່ງຕໍ່, ໃຫ້ລະບຸໜຶ່ງໃນໝາຍເລກດັ່ງຕໍ່ໄປນີ້ແກ່ພະນັກງານຮັບໂທລະສັບ.

### ການປະກັນການວ່າງງານ

ພະນັກງານຂອງ EDD ແມ່ນພ້ອມໃຫ້ບໍລິການໃນວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 12 ໂມງສວາຍ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ.

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາແອັດສະປາຍໂຍນ | 1-800-326-8937 |
| ພາສາຈີນກວາງຕຸ້ງ | 1-800-547-3506 |
| ພາສາຈີນແມນດາຣິນ | 1-866-303-0706 |
| ພາສາຫວຽດ | 1-800-547-2058 |
| TTY | 1-800-815-9387 |

### ການປະກັນຄົນພິການ

ພະນັກງານຂອງ EDD ແມ່ນພ້ອມໃຫ້ບໍລິການໃນວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 5 ໂມງແລງ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ.

| | |
|---|---|
| ພາສາອັງກິດ | 1-800-480-3287 |
| ພາສາແອັດສະປາຍໂຍນ | 1-866-658-8846 |
| TTY | 1-800-563-2441 |

### ການລາພັກວຽກດ້ວຍເຫດຜົນທາງຄອບຄົວແຕ່ຍັງໄດ້ຮັບຄ່າຈ້າງ

ພະນັກງານຂອງ EDD ແມ່ນພ້ອມໃຫ້ບໍລິການໃນວັນຈັນຮອດວັນສຸກ ໃນລະຫວ່າງເວລາ 8 ໂມງເຊົ້າ ແລະ 5 ໂມງແລງ (ເຂດເວລາປາຊີຟິກ), ນອກຈາກໃນມື້ພັກຂອງລັດ.

| | |
|---|---|
| ພາສາອັງກິດ | 1-877-238-4373 |
| ພາສາແອັດສະປາຍໂຍນ | 1-877-379-3819 |
| ພາສາອາເມນີ | 1-866-627-1567 |
| ພາສາຈີນກວາງຕຸ້ງ | 1-866-692-5595 |
| ພາສາພັນຈາບ | 1-866-627-1568 |
| ພາສາຕາກາລັອກ | 1-866-627-1569 |
| ພາສາຫວຽດ | 1-866-692-5596 |
| TTY | 1-800-445-1312 |

**ລັດຄາລິຟໍເນຍ**

**ນະໂຍບາຍການພັດທະນາແຮງງານ ແລະ ກຳລັງແຮງ**

**ກົມພັດທະນາການຈ້າງງານ**

ສື່ສິ່ງພິມ *For Your Benefit: California's Programs for the Unemployed* (DE 2320) ນີ້ແມ່ນສາມາດເບິ່ງ, ສັ່ງພິມ ແລະ ສັ່ງຊື້ໄດ້ທາງອອນລາຍ ໂດຍໄປທີ່ Online Forms and Publications (forms.edd.ca.gov/forms).

EDD ຄືຜູ້ຈ້າງງານ/ໂຄງການໂອກາດທີ່ເທົ່າທຽມກັນ. ຄວາມຊ່ວຍເຫຼືອ ແລະ ການບໍລິການເສີມແມ່ນມີໃຫ້ເມື່ອມີການຮ້ອງຂໍໃຫ້ແກ່ບຸກຄົນທີ່ພິການ.

ຂໍ້ຄວາມປະຕິເສດ: ຖ້າທ່ານເລືອກການຮັບແບບພອມເປັນເຈ້ຍ, ມັນຍັງຈຳເປັນທີ່ EDD ຈະສົ່ງເອກະສານບາງຢ່າງຜ່ານໄປສະນີຂອງສະຫະລັດອາເມຣິກາ.